**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ　　　　　　　　　　　　　　　　　　ເລກທີ　　　　/ສພຊ

ນະຄອນຫຼວງວຽງຈັນ, ວັນທີ

# ກົດໝາຍ
# ວ່າດ້ວຍການຈະລາຈອນທາງບົກ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1　(ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຈະລາຈອນທາງບົກ ເພື່ອອຳນວຍຄວາມສະດວກ, ການຄວບຄຸມການສັນຈອນ ແລະ ການນຳໃຊ້ ຍານພາຫະນະ ຕາມທາງຫຼວງ ໃຫ້ມີຄວາມ ປອດໄພ, ສະດວກ, ໂລ່ງລ່ຽນ ແລະ ເປັນລະບຽບຮຽບຮ້ອຍ ແນໃສ່ ຫຼຸດຜ່ອນອຸບປະຕິເຫດ, ຄວາມແອອັດໃນການສັນຈອນ ຕິດພັນກັບການບໍລິການຂົນສົ່ງ, ການປົກຮັກສາທາງຫຼວງ, ສິ່ງແວດລ້ອມ, ຊີວິດ, ຊັບສິນ ຂອງບຸກຄົນ ແລະ ສາທາລະນະ ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ການເຊື່ອມໂຍງ ແລະ ເຊື່ອມຈອດກັບ ພາກພື້ນ ແລະ ສາກົນ.

**ມາດຕາ 2　(ປັບປຸງ) ການຈະລາຈອນທາງບົກ**

ການຈະລາຈອນທາງບົກ ແມ່ນ ການສັນຈອນໄປມາ ຂອງ ຄົນ ແລະ ສັດ ດ້ວຍການນຳໃຊ້ ຫຼື ບໍ່ນຳໃຊ້ຍານ ພາຫະນະ ແລະ ພາຫະນະທາງບົກ ທຸກປະເພດ ຕາມທາງຫຼວງ ໂດຍປະຕິບັດກົດຈະລາຈອນ ຢ່າງເຂັ້ມງວດ.

**ມາດຕາ 3　(ປັບປຸງ) ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ມີຄວາມໝາຍ ດັ່ງນີ້:

**1. ກົດຈະລາຈອນທາງບົກ** ໝາຍເຖິງ ລະບຽບການສຳລັບການ ຄຸ້ມຄອງ, ຮັກສາຄວາມເປັນລະ ບຽບຮຽບຮ້ອຍ ແລະ ຄວາມປອດໄພໃນການຈະລາຈອນຕາມທາງຫຼວງ ຊຶ່ງຜູ້ນຳໃຊ້ທາງຫຼວງ ຕ້ອງປະຕິບັດ ຢ່າງ ເຂັ້ມງວດ;

**2. ຍານພາຫະນະທາງບົກ** ໝາຍເຖິງ ລົດທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ ທີ່ມີສອງລໍ້ຂຶ້ນໄປ ມີຄົນ ຂັບ ແລະ ບໍ່ມີຄົນຂັບ ໂດຍນຳໃຊ້ນໍ້າມັນເຊື້ອໄຟ, ອາຍແກັດ, ແສງອາທິດ, ໄຟຟ້າ ແລະ ໄນໂຕຣເຈນ ເປັນ ພະລັງງານຂັບເຄື່ອນ;

**3. ຜູ້ນຳໃຊ້ທາງຫຼວງ** ໝາຍເຖິງ ຜູ້ ຂັບຂີ່ ຫຼື ນຳໃຊ້ ຍານພະຫະນະ ແລະ ພາຫະນະ ທາງບົກ, ຄົນຍ່າງ, ຜູ້ ຄວບຄຸມສັດ, ຜູ້ອານະໄມ, ຜູ້ບູລະນະຮັກສາ ແລະ ສ້ອມແປງ, ຜູ້ຕິດຕັ້ງປ້າຍ ແລະ ເຄື່ອງໝາຍ ຈະລາຈອນຕາມ ທາງຫຼວງ;

**4. ທາງຫຼວງ** ໝາຍເຖິງ ຂອບເຂດພື້ນທີ່ສາທາລະນະ ຊຶ່ງໄດ້ກໍ່ສ້າງຂຶ້ນ ເພື່ອຮັບໃຊ້ການສັນຈອນຈາກຈຸດໜຶ່ງຫາອີກຈຸດໜຶ່ງ ເຊັ່ນ ທາງຫຼວງແຫ່ງຊາດ, ທາງຫຼວງແຂວງ, ທາງຫຼວງເມືອງ, ທາງຕົວເມືອງ, ທາງຊົນນະບົດ, ທາງສະເພາະ, ທາງດ່ວນ, ທາງຄົນຍ່າງ ແລະ ທາງລົດຖີບ;

**5. ໜ້າທາງ** ໝາຍເຖິງ ພື້ນທີ່ຂອງທາງຫຼວງທີ່ນໍາໃຊ້ສໍາລັບການຈະລາຈອນ;

**6. ຊ່ອງຈະລາຈອນ** ໝາຍເຖິງ ສ່ວນໜຶ່ງຂອງທາງທີ່ຈັດໃຫ້ເປັນຊ່ອງແຖວດຽວທີ່ມີຄວາມກວ້າງຢ່າງພຽງພໍ ສໍາລັບການແລ່ນຍານພາຫະນະ ແລະ ການສັນຈອນຂອງພາຫະນະ ໂດຍ ຂີດ ຫຼື ແຕ້ມ ເຄື່ອງໝາຍ ໃນການນໍາທາງ ແລະ ແຍກ ຍານພາຫະນະ ແລະ ພາຫະນະ ເພື່ອຫຼຸດຜ່ອນຄວາມສັບສົນ, ເຮັດໃຫ້ການຈະລາຈອນມີຄວາມ ໂລ່ງລ່ຽນ ແລະ ປອດໄພ;

**7. ທາງຄົບ** ໝາຍເຖິງ ຈຸດທີ່ທາງ ສອງເສັ້ນ ຫຼື ຫຼາຍເສັ້ນ ມາຄົບກັນ ຫຼື ຕັດກັນ ໃນລະດັບໜ້າທາງດຽວກັນ;

**8. ທາງແຍກ** ໝາຍເຖິງ ຈຸດທີ່ມີທາງສອງເສັ້ນ ຫຼື ຫຼາຍເສັ້ນ ມາຄົບກັນ, ຕັດກັນ ຫຼື ເຊື່ອມຕໍ່ເຂົ້າກັນໃນລະດັບໜ້າທາງດຽວກັນ ຫຼື ຕ່າງກັນ;

**9. ຢຸດລົດ** ໝາຍເຖິງ ຢຸດເຄື່ອນໄຫວຍານພາຫະນະທາງບົກຢູ່ຈຸດທີ່ກໍານົດຕາມທາງຫຼວງ ຫຼື ຖະໜົນໃນເວລາອັນສັ້ນໂດຍບໍ່ມອດເຄື່ອງຈັກ ແລະ ຜູ້ຂັບຂີ່ຕ້ອງປະຈໍາຢູ່ຕໍາແໜ່ງຂອງຄົນຂັບ;

**10. ຈອດລົດ** ໝາຍເຖິງ ຢຸດເຄື່ອນໄຫວຍານພາຫະນະທາງບົກຢູ່ຈຸດທີ່ກໍານົດຕາມທາງຫຼວງ ຫຼື ຖະໜົນໂດຍມອດເຄື່ອງຈັກ ແລະ ຜູ້ຂັບຂີ່ສາມາດອອກຈາກລົດໄດ້;

**11. ລົດຫົວລາກ** ໝາຍເຖິງ ຍານພາຫະນະທາງບົກທີ່ມີລະບົບຂັບເຄື່ອນດ້ວຍເຄື່ອງຈັກນໍາໃຊ້ສໍາລັບແກ່ເຄິ່ງຫາງລາກ;

**12. ເຄິ່ງຫາງລາກ** ໝາຍເຖິງ ພາຫະນະທາງບົກທີ່ເກາະໃສ່ລົດຫົວລາກ;

**13. ຫາງລາກ** ໝາຍເຖິງ ພາຫະນະທາງບົກທີ່ເກາະໃສ່ລົດຂົນສົ່ງທົ່ວໄປ;

**14. ການຈະລາຈອນພິເສດ** ໝາຍເຖິງ ການສັນຈອນຂອງຂະບວນລົດ ຜູ້ນໍາ, ແຂກຕ່າງປະເທດ, ໂຮງໝໍ, ມອດໄຟ, ກູ້ໄພ, ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ມີລະບົບສັນຍານແຈ້ງເຕືອນ ຊຶ່ງກໍາລັງປະຕິບັດໜ້າທີ່ອັນຮີບດ່ວນ;

**15. ເຂດຊຸມຊົນ** ໝາຍເຖິງ ບໍລິເວນທີ່ມີປະຊາຊົນອາໄສຢູ່ ຢ່າງໜາແໜ້ນ;

**16. ສິນຄ້າອັນຕະລາຍ** ໝາຍເຖິງ ສິນຄ້າທີ່ມີ ທາດກໍາມັນຕະພາບລັງສີ, ວັດຖຸນິວເຄຼຍ ແລະ ເຄມີອັນຕະລາຍ ທີ່ມີ ຫຼື ບໍ່ມີ ກິ່ນ, ອາຍ ທີ່ເປັນອັນຕະລາຍຕໍ່ ສຸຂະພາບ, ຊີວິດຂອງ ຄົນ, ສັດ ແລະ ພືດ;

**17. ສິນຄ້າຂະໜາດໃຫຍ່ພິເສດ** ໝາຍເຖິງ ສິນຄ້າທີ່ມີຂະໜາດໃຫຍ່ ຫຼື ມີນໍ້າໜັກເກີນມາດຕະຖານເຕັກນິກທີ່ກໍານົດ ຊຶ່ງສາມາດແຍກ ຫຼື ບໍ່ແຍກເປັນຊິ້ນສ່ວນໄດ້;

**18. ຄາລາວານ** ໝາຍເຖິງ ການເດີນທາງເປັນກຸ່ມໃຫຍ່ພ້ອມກັນໂດຍໃຊ້ຍານພາຫະນະ ເພື່ອການຄ້າ, ການທ່ອງທ່ຽວ, ການທູດ ຫຼື ພິທີການ;

**19. ຂະບວນລົດຂົນສົ່ງ** ໝາຍເຖິງ ຍານພາຫະນະຕັ້ງແຕ່ສາມຄັນຂຶ້ນໄປທີ່ແລ່ນໄປໃນທິດທາງ ແລະ ໃນຊ່ອງຈາລະຈອນດຽວກັນ, ໃຊ້ຄວາມໄວເທົ່າກັນ ໂດຍຄັນທາງໜ້າຕ້ອງເປີດໄຟຕາຕໍ່າ ຫຼື ມີລົດເປີດໂຄມໄຟໝູນ ສີເຫຼືອງ ນໍາທາງ;

**20. ບ່າທາງ** ໝາຍເຖິງ ພື້ນທີ່ ທີ່ຕໍ່ຈາກເສັ້ນຂອບທາງຫຼວງອອກໄປທາງດ້ານຂ້າງ ເພື່ອນໍາໃຊ້ເປັນຊ່ອງຈອດຍານພາຫະນະສຸກເສີນ ຫຼື ທາງຄົນຍ່າງ;

**21. ສິ່ງກີດຂວາງ** ໝາຍເຖິງ ສິ່ງທີ່ເກີດຈາກການກະທໍາຂອງ ຄົນ, ສັດ ແລະ ທໍາມະຊາດ ທີ່ເປັນອຸປະສັກໃຫ້ການຈະລາຈອນ ເປັນຕົ້ນ ວັດສະດຸກໍ່ສ້າງ, ຍານພາຫະນະ, ພາຫະນະ, ທ່ອນໄມ້, ດິນ, ຫີນ ແລະ ອື່ນໆທີ່ຢູ່ຕາມທາງຫຼວງ;

**22. ການບໍລິການລາກແກ່ຍານພາຫະນະທາງບົກ** ໝາຍເຖິງການ ຍົກຍໍ, ລາກແກ່ ຍານພາຫະນະທາງບົກໃນກໍລະນີຂັດຂ້ອງທາງດ້ານເຕັກນິກ, ເກີດອຸບປະຕິເຫດ ຫຼື ເຫດການສຸກເສີນ, ລະເມີດກົດລະບຽບ

ກ່ຽວກັບການຈອດຍານພາຫະນະທາງບົກ ຕາມການຕົກລົງຂອງເຈົ້າໜ້າທີ່ ຕຳຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ;

**23. ການບໍລິການທີ່ປຶກສາດ້ານວິສະວະກຳຄວາມປອດໄພທາງຫຼວງ** ໝາຍເຖິງ ວິສາຫະກິດ ທີ່ໃຫ້ຄຳປຶກສາກ່ຽວກັບວິສະວະກຳຄວາມປອດໄພການຈະລາຈອນທາງບົກ ເຊັ່ນ ການກວດສອບຄວາມປອດໄພທາງຫຼວງ, ການສືບຫາຂໍ້ມູນ ແລະ ແກ້ໄຂຈຸດທີ່ເຄີຍເກີດອຸບປະຕິເຫດຕາມທາງຫຼວງ ແລະ ການຄຸ້ມຄອງຄວາມປອດໄພສະຖານທີ່ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ;

**24. ໂຮງຮຽນສອນຂັບຂີ່ຍານພາຫະນະທາງບົກ** ໝາຍເຖິງ ໂຮງຮຽນ ວິຊາຊີບ, ໂຮງຮຽນສອນຂັບລົດທົ່ວໄປ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານຈະລາຈອນທາງບົກ**

ລັດ ຊຸກຍູ້ ແລະ ສົ່ງເສີມ ວຽກງານຈະລາຈອນທາງບົກ ດ້ວຍການສະໜອງ ງົບປະມານ, ຍານພາຫະ ນະ, ວັດຖຸປະກອນທີ່ຈຳເປັນ, ຍົກລະດັບ ຄວາມຮູ້, ຄວາມສາມາດ ໃຫ້ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ.

ລັດ ສົ່ງເສີມ ການນຳໃຊ້ ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການພັດທະນາວຽກງານຈະລາຈອນທາງບົກ ໃຫ້ຄວາມເຂັ້ມແຂງ, ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການພັດທະນາວຽກງານຈະລາຈອນຂົນສົ່ງມວນຊົນໃນຕົວເມືອງ ເພື່ອຮັບປະກັນໃຫ້ການຈະລາຈອນໃນຕົວເມືອງ ມີຄວາມ ປອດໄພ, ສະດວກ, ໂລ່ງລ່ຽນ ແລະ ເປັນລະບຽບຮຽບຮ້ອຍ ພ້ອມທັງບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມໃນຕົວເມືອງ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງ ພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາວຽກງານຈະລາຈອນທາງບົກ ໃຫ້ມີປະສິດທິຜົນ ແລະ ຍືນຍົງ.

**ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານຈະລາຈອນທາງບົກ**

ວຽກງານຈະລາຈອນທາງບົກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນດຳເນີນງານ ດ້ານຄວາມປອດໄພທາງຫຼວງ;

2. ຮັບປະກັນຄວາມ ປອດໄພ, ເປັນລະບຽບຮຽບຮ້ອຍ, ສະດວກ, ໂລ່ງລ່ຽນ, ຕໍ່ເນື່ອງ ແລະ ມີປະສິດທິຜົນ ດ້ວຍຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

3. ປະສານສົມທົບລະຫວ່າງ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

4. ຮັບປະກັນຄວາມສອດຄ່ອງຂອງ ກົດຈະລາຈອນທາງບົກ ຂອງ ສປປ ລາວ ກັບ ພາກພື້ນ ແລະ ສາກົນ ຕາມສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 6 (ປັບປຸງ) ພັນທະກ່ຽວກັບວຽກງານຈະລາຈອນທາງບົກ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ສັນຈອນຕາມທາງຫຼວງ ຢູ່ ສປປ ລາວ ຕ້ອງເຄົາລົບ ແລະ ປະຕິບັດ ຕາມກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວ ຂ້ອງ ຢ່າງເຂັ້ມງວດ, ພ້ອມທັງປະກອບສ່ວນໃນການປົກປັກຮັກສາ ໂຄງລ່າງພື້ນຖານກ່ຽວກັບລະບົບການຈະ ລາຈອນທາງບົກ ໃຫ້ມີຄວາມຍືນຍົງ.

**ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ, ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກັບວຽກງານຈະລາຈອນທາງບົກ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຈະລາຈອນທາງບົກ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ການຊ່ວຍເຫຼືອ, ການຮ່ວມມືດ້ານການລົງທຶນ ແລະ ການພັດທະນາບຸກຄະລາກອນ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

# ພາກທີ II
# ການຈະລາຈອນທາງບົກ
## ໝວດທີ 1
## ກົດລະບຽບການຈະລາຈອນທາງບົກ

**ມາດຕາ 9 (ປັບປຸງ) ກົດລະບຽບທົ່ວໄປ**

ການຈະລາຈອນທາງບົກ ຢູ່ ສປປ ລາວ ຕ້ອງໃຊ້ກ້ຳຂວາ, ຜູ້ນຳໃຊ້ທາງຫຼວງ ຕ້ອງໄປຕາມຊ່ອງຈະລາຈອນ ຕາມທິດທາງກຳນົດ ແລະ ຕ້ອງປະຕິບັດຕາມກົດໝາຍສະບັບນີ້ ແລະ ລະບຽບການກ່ຽວກັບກົດຈະລາຈອນທາງບົກ ຢ່າງເຂັ້ມງວດ.

ກົດຈະລາຈອນທາງບົກ ຕ້ອງບັນຈຸເຂົ້າໃນຫຼັກສູດໃນ ການຮຽນ-ການສອນ ໃນລະດັບສາມັນສຶກສາ.

**ມາດຕາ 10 (ປັບປຸງ) ກົດລະບຽບສຳລັບຄົນຍ່າງ**

ການຍ່າງຕາມທາງຫຼວງ ແລະ ຍ່າງຂ້າມທາງຫຼວງ ໃຫ້ປະຕິບັດ ດັ່ງນີ້:

1. ການຍ່າງຕາມທາງຫຼວງ ຕ້ອງຍ່າງຕາມທາງຄົນຍ່າງ ຫຼື ບ່າທາງ, ສຳລັບບ່ອນທີ່ບໍ່ມີ ທາງຄົນຍ່າງ ຫຼື ບ່າທາງ ໃຫ້ຍ່າງລຽບຕາມແຄມທາງກ້ຳຊ້າຍ ເພື່ອໃຫ້ສາມາດແນມເຫັນລົດທີ່ແລ່ນສວນທາງມາ, ຖ້າຫາກມີຫຼາຍຄົນຍ່າງນຳກັນໃຫ້ຍ່າງຕາມຫຼັງກັນເປັນແຖວດຽວ ແລະ ແນບເຂົ້າແຄມທາງ ຍົກເວັ້ນການສວນສະໜາມ, ຂະບວນການ, ຂະບວນ ແຫ່ພິທີທາງສາສະໜາ, ສິ່ງສະການ ຫຼື ຂະບວນຍ່າງອື່ນ ທີ່ໄດ້ຮັບອະນຸຍາດ;
2. ການຍ່າງຂ້າມທາງຫຼວງ ຕ້ອງຍ່າງຢູ່ບ່ອນ ທາງມ້າລາຍ, ທາງຄົບ, ທາງແຍກ, ຂົວຂ້າມທາງ, ທາງລອດພື້ນ ຫຼື ບ່ອນຂ້າມທາງ ທີ່ມີເຈົ້າໜ້າທີ່ຕຳຫຼວດຈະລາຈອນ ຫຼື ພະນັກງານທີ່ໄດ້ຮັບມອບໝາຍຄວບຄຸມ, ໄຟສັນຍານ ຫຼື ບ່ອນທີ່ກຳນົດໄວ້, ນອກຈາກທີ່ບໍ່ໄດ້ກ່າວໄວ້ຂ້າງເທິງນີ້ ໃຫ້ຂ້າມທາງຢູ່ບ່ອນທີ່ເປັນທາງຊື່ ເພື່ອໃຫ້ສາມາດແນມເຫັນການສັນຈອນຈາກທຸກທິດທາງໄດ້ ແລະ ມີຄວາມປອດໄພ;

ທຸກຄົນ ມີໜ້າທີ່ຊ່ວຍເຫຼືອ ເດັກນ້ອຍ, ຜູ້ເຖົ້າ, ຄົນພິການ ທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ໃນເວລາຍ່າງຂ້າມທາງຫຼວງ.

**ມາດຕາ 11 (ປັບປຸງ) ກົດລະບຽບສຳລັບການຄວບຄຸມສັດລ້ຽງ**

ການຄວບຄຸມສັດລ້ຽງ ຕາມທາງຫຼວງ ໃຫ້ປະຕິບັດ ດັ່ງນີ້:

1. ການເຄື່ອນຍ້າຍສັດ ຕາມທາງຫຼວງ ຕ້ອງມີຜູ້ຄວບຄຸມ ແລະ ປະຕິບັດຕາມລະບຽບການກ່ຽວກັບກົດຈະລາຈອນທາງບົກ ຢ່າງເຂັ້ມງວດ;
2. ໃນກໍລະນີ ເກີດອຸບປະຕິເຫດຍ້ອນສັດລ້ຽງ ຫຼື ປ່ອຍສັດທຸກຊະນິດ ຕາມທາງຫຼວງ ເຈົ້າຂອງ ຫຼື ຜູ້ຄວບຄຸມສັດ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ສັດລ້ຽງນັ້ນໄດ້ກໍ່ຂຶ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. ຢູ່ບ່ອນທີ່ມີການລ້ຽງ ຫຼື ຍ້າຍສັດ ຕາມທາງຫຼວງ ຢ່າງເປັນປະຈຳ ຕ້ອງມີປ້າຍເຕືອນໃຫ້ລະວັງສັດລ້ຽງ ເພື່ອໃຫ້ຜູ້ຂັບຂີ່ລົດມີຄວາມລະມັດລະວັງ. ໃນກໍລະນີເກີດອຸບປະຕິເຫດໃນເຂດທີ່ມີປ້າຍເຕືອນນັ້ນ ຜູ້ຂັບຂີ່ລົດ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.

**ມາດຕາ 12 (ປັບປຸງ) ກົດລະບຽບສຳລັບຜູ້ຂັບຂີ່ຍານພາຫະນະທາງບົກ**

ຜູ້ຂັບຂີ່ລົດທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກສອງລໍ້ຂຶ້ນໄປ ຕ້ອງມີເອກະສານປະຈຳຍານພາຫະນະໃນເວລາຂັບຂີ່ ດັ່ງນີ້:

1. ໃບອະນຸຍາດຂັບຂີ່ຕາມປະເພດລົດທີ່ຕົນຂັບຂີ່;
2. ໃບທະບຽນຍານພາຫະນະ, ຖ້າເປັນລົດລາກຕ້ອງມີໃບທະບຽນ ຫາງລາກ ຫຼື ເຄິ່ງຫາງລາກ;
3. ໃບອະນຸຍາດດຳເນີນທຸລະກິດສຳລັບຍານພາຫະນະ ຂົນສົ່ງຜູ້ໂດຍສານ ຫຼື ຂົນສົ່ງສິນຄ້າ;
4. ໃບຢັ້ງຢືນການກວດກາເຕັກນິກຍານພາຫະນະ;
5. ໃບປະກັນໄພຍານພາຫະນະ;
6. ໃບເສຍຄ່າທາງປະຈຳປີ.

ຜູ້ຂັບຂີ່ຍານພາຫະນະທາງບົກ ມີຄວາມຮັບຜິດຊອບ ດັ່ງນີ້:

1. ກວດກາສະພາບເຕັກນິກຍານພາຫະນະເປັນປະຈຳ ເພື່ອຮັບປະກັນຄວາມປອດໄພ ແລະ ບໍ່ໃຫ້ຍານພາຫະນະເກີດຂັດຂ້ອງ ໃນເວລາແລ່ນຕາມທາງຫຼວງ;
2. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການກວດກາຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ;
3. ແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃຫ້ການຊ່ວຍເຫຼືອແກ່ຜູ້ໄດ້ຮັບບາດເຈັບເມື່ອພົບເຫັນອຸບປະຕິເຫດເກີດຂຶ້ນຕາມທາງຫຼວງ;
4. ຢຸດ ແລະ ປ່ອຍທາງໃຫ້ແກ່ການຈະລາຈອນພິເສດ;
5. ໃຫ້ບູລິມະສິດແກ່ຄົນຍ່າງຂ້າມທາງ;
6. ເຄື່ອນຍ້າຍຍານພາຫະນະອອກຈາກຊ່ອງທາງການຈະລາຈອນໂດຍດ່ວນ ໃນກໍລະນີຍານພາຫະນະເກີດຂັດຂ້ອງ, ເປ່ເພ ຢູ່ຕາມທາງຫຼວງ.

**ມາດຕາ 13 (ປັບປຸງ) ກົດລະບຽບສຳລັບຍານພາຫະນະ ແລະ ພາຫະນະທາງບົກ ທີ່ນຳໃຊ້ຕາມທາງຫຼວງ**

ຜູ້ຂັບຂີ່ລົດທຸກຊະນິດທີ່ສັນຈອນຕາມທາງຫຼວງ ຕ້ອງປະຕິບັດຕາມລະບຽບການກ່ຽວກັບກົດຈະລາຈອນທາງບົກ ຢ່າງເຂັ້ມງວດ, ຕ້ອງຕິດປ້າຍທະບຽນ, ມີເອກະສານຄົບຖ້ວນ ຕິດຕົວໄປນຳ. ສຳລັບລົດໄຖ, ລົດຕ່ອກໆ ຕ້ອງມີ ຫ້າມລໍ້, ໄຟໜ້າ, ໄຟທ້າຍ ຫຼື ຕິດແຜ່ນສະທ້ອນແສງໃສ່ ດ້ານຂ້າງ ແລະ ດ້ານຫຼັງ.

ຜູ້ຂັບຂີ່ລົດທຸກຊະນິດທີ່ສັນຈອນຕາມທາງຫຼວງ ຕ້ອງປະຕິບັດຕາມລະບຽບການກ່ຽວກັບກົດຈະລາຈອນທາງບົກ ຢ່າງເຂັ້ມງວດ. ສຳລັບລົດຖີບ ສອງລໍ້, ສາມລໍ້ ຕ້ອງມີຫ້າມລໍ້, ໄຟໜ້າ, ໄຟທ້າຍ ຫຼື ຕິດແຜ່ນສະທ້ອນແສງໃສ່ ດ້ານໜ້າ, ດ້ານຫຼັງ ແລະ ດ້ານຂ້າງ.

**ມາດຕາ 14 (ໃໝ່) ກົດລະບຽບສຳລັບການຊິງຂຶ້ນໜ້າ ແລະ ການສວນທາງກັນຢູ່ບ່ອນທີ່ມີສິ່ງກີດ ຂວາງ**

ກ່ອນຈະຊິງຂຶ້ນໜ້າ ຜູ້ຂັບຂີ່ຍານພາຫະນະທາງບົກ ຕ້ອງເບິ່ງທາງດ້ານໜ້າ, ດ້ານຂ້າງ ແລະ ດ້ານຫຼັງ ຖ້າເຫັນວ່າມີ ຄວາມສະດວກ, ປອດໄພ ແລະ ໄລຍະຫ່າງພຽງພໍທີ່ຈະຊິງຂຶ້ນໜ້າໄດ້ ຈຶ່ງໃຫ້ສັນຍານດ້ວຍການ ເປີດໄຟສັນຍານລ້ຽວຊ້າຍ ຫຼື ເຕືອນດ້ວຍສັນຍານແກ, ຖ້າເປັນຍາມຄໍ່າມືດໃຫ້ເຕືອນດ້ວຍການກົດໄຟຕາຕໍ່າ, ຕາສູງສະຫຼັບກັນ, ແລ້ວຈຶ່ງເລັ່ງຄວາມໄວຂຶ້ນໄປ ເມື່ອຂຶ້ນໄປຫວີດ ແລະ ເຫັນວ່າມີໄລຍະຫ່າງຢ່າງພຽງພໍແລ້ວໃຫ້ສັນຍານໄຟລ້ຽວຂວາ ເພື່ອເຂົ້າຊ່ອງຈາລະຈອນເດີມ.

ການຂັບຂີ່ຍານພາຫະນະທາງບົກສວນທາງກັນຢູ່ບ່ອນທີ່ມີສິ່ງກີດຂວາງ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ຂັບຂີ່ຍານພາຫະນະທາງບົກຕ້ອງຢຸດ ເມື່ອມີສິ່ງກີດຂວາງທາງດ້ານໜ້າ ເພື່ອປ່ອຍທາງໃຫ້ຍານພາຫະນະທາງບົກທີ່ສວນທາງມານັ້ນ ໄປກ່ອນ;
2. ຖ້າສວນທາງກັນຢູ່ກາງຄ້ອຍ ທີ່ມີຄວາມຫຍຸ້ງຍາກ ຫຼື ສິ່ງກີດຂວາງ, ຜູ້ຂັບຂີ່ຍານພາຫະນະທາງບົກທີ່ລົງຄ້ອຍນັ້ນ ຕ້ອງປ່ອຍໃຫ້ຍານພາຫະນະທາງບົກທີ່ຂຶ້ນຄ້ອຍ ໄປກ່ອນ.

**ມາດຕາ 15 (ໃໝ່) ກົດລະບຽບສຳລັບການ ຢຸດ, ຈອດຊົ່ວຄາວ ແລະ ຈອດໄລຍະຍາວ ຍານພາຫະນະທາງບົກ ຕາມທາງຫຼວງ**

ການຢຸດຍານພາຫະນະທາງບົກ ສາມາດຢຸດຊົ່ວຄາວໃນເວລາທີ່ຈຳເປັນ ເພື່ອລໍຖ້າໄຟສັນຍານຈະລາຈອນ, ປ່ອຍທາງໃຫ້ ຍານພາຫະນະທາງບົກອື່ນ, ຄົນຍ່າງຂ້າມທາງ ແລະ ຂະບວນສັນຈອນພິເສດ ໄປກ່ອນ.

ການຈອດຍານພາຫະນະທາງບົກຊົ່ວຄາວ ສາມາດຈອດໃນໄລຍະເວລາບໍ່ເກີນ ຫ້າ ນາທີ ເພື່ອ ໃຫ້ຜູ້ໂດຍສານ ຂຶ້ນ-ລົງ, ຄ່ຽນຖ່າຍ ສິນຄ້າ ຫຼື ເຄື່ອງຂອງ ຂຶ້ນ-ລົງ, ກວດກາສະພາບຍານພາຫະນະທາງບົກ ແລະ ອື່ນໆ ໂດຍບໍ່ມອດເຄື່ອງຈັກ ແລະ ຜູ້ຂັບຂີ່ ຍັງປະຈຳຢູ່ບ່ອນຂັບ ຫຼື ອອກຢູ່ບໍລິເວນໃກ້ຄຽງຍານພາຫະນະທາງບົກ.

ການຈອດຍານພາຫະນະທາງບົກໄລຍະຍາວ ສາມາດຈອດໂດຍບໍ່ມີການກຳນົດເວລາ, ໃນເວລາຈອດຍານພາຫະນະທາງບົກ ຜູ້ຂັບຂີ່ ຕ້ອງຫ້າມລໍ້ມື ຫຼື ໃຊ້ມາດຕະການຄວາມປອດໄພອື່ນ, ມອດຈັກ, ອອກຈາກ ແລະ ໃສ່ກະແຈ ຍານພາຫະນະທາງບົກ.

ສຳລັບ ລາຍລະອຽດກ່ຽວກັບການ ຢຸດ, ຈອດຊົ່ວຄາວ ແລະ ຈອດໄລຍະຍາວ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວກັບກົດຈະລາຈອນທາງບົກ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 16 (ໃໝ່) ກົດລະບຽບສຳລັບການຂັບຂີ່ຜ່ານທາງຄົບ, ທາງແຍກ**

ຜູ້ຂັບຂີ່ຍານພາຫະນະທາງບົກ ທີ່ຂັບຂີ່ຜ່ານ ທາງຄົບ, ທາງແຍກ ໃຫ້ປະຕິບັດຕາມ ໄຟສັນຍານຈະລາຈອນ ຫຼື ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ. ໃນກໍລະນີທາງຄົບ, ທາງແຍກ ທີ່ບໍ່ມີ ໄຟສັນຍານຈະລາຈອນ, ປ້າຍຈະລາຈອນ, ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ, ໄຟສັນຍານຈະລາຈອນສີເຫຼືອງຮຸ່ງກະພິບ ຜູ້ຂັບຂີ່ ຕ້ອງປະຕິບັດຕາມລະບຽບການກ່ຽວກັບກົດຈະລາຈອນທາງບົກ ຢ່າງເຂັ້ມງວດ.

**ມາດຕາ 17 (ໃໝ່) ກົດລະບຽບສຳລັບການຂັບຂີ່ຍານພາຫະນະທາງບົກຜ່ານບ່ອນຂ້າມທາງ ແລະ ບ່ອນຢຸດຍານພາຫະນະຂົນສົ່ງຜູ້ໂດຍສານປະຈຳທາງ**

ຜູ້ຂັບຂີ່ຍານພາຫະນະທາງບົກ ເວລາຂັບຂີ່ໄປໃກ້ຈະເຖິງບ່ອນຂ້າມທາງ ຫຼື ທາງມ້າລາຍ ຕ້ອງຢຸດປ່ອຍທາງໃຫ້ຄົນທີ່ກຳລັງຍ່າງ ຫຼື ກຳລັງລົງຈາກຍານພາຫະນະທາງບົກ ທີ່ຈະຂ້າມທາງ ໄປກ່ອນ.

ໃນກໍລະນີບ່ອນຢຸດຍານພາຫະນະທາງບົກປະຈຳທາງຢູ່ກາງທາງ ຫຼື ຍານພາຫະນະຂົນສົ່ງຜູ້ໂດຍສານດ່ວນປະຈຳທາງ (BRT) ຜູ້ຂັບຂີ່ຍານພາຫະນະທາງບົກ ຕ້ອງຢຸດປ່ອຍທາງໃຫ້ຜູ້ໂດຍສານຂ້າມທາງໄປກ່ອນ.

**ມາດຕາ 18 (ໃໝ່) ກົດລະບຽບສຳລັບການຂັບຂີ່ຍານພາຫະນະທາງບົກຜ່ານຂົວ**

ຜູ້ຂັບຂີ່ຍານພາຫະນະທາງບົກ ກ່ອນຈະເຂົ້າຂົວ ຕ້ອງປະຕິບັດຕາມ ປ້າຍ, ເຄື່ອງໝາຍ ແລະ ສັນຍານຈະລາຈອນ. ໃນໄລຍະເວລາແລ່ນຜ່ານຂົວ ຕ້ອງຮັບປະກັນຄວາມປອດໄພ ໂດຍຮັກສາໄລຍະຫ່າງ, ໄປຕາມຊ່ອງຈະລາຈອນ, ບໍ່ໃຫ້ ຊີງຂຶ້ນໜ້າ, ຈອດ, ຢຸດ ຫຼື ຢຸດກະທັນຫັນ, ຖອຍຫຼັງ ຫຼື ລ້ຽວກັບ.

ໃນກໍລະນີຍານພາຫະນະທາງບົກ ຕ້ອງຢຸດ ຫຼື ຈອດ ຍ້ອນສະພາບເຕັກນິກຂອງຍາພາຫະນະທາງບົກຂັດຂ້ອງ ຫຼື ມີເຫດການສຸກເສີນ ຜູ້ຂັບຂີ່ ຕ້ອງນຳເອົາຍານພາຫະນະທາງບົກໄປຈອດແນບເຂົ້າຂ້າງຂົວກ້ຳຂວາ. ຖ້າຫາກບໍ່ສາມາດເຄື່ອນຍ້າຍໄດ້ ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານສຸກເສີນ, ໄຟສັນຍານເຕືອນໄພຢູ່ດ້ານຫຼັງຂອງຍານພາຫະນະທາງບົກ, ວາງເຄື່ອງໝາຍ ໃນໄລຍະຫ່າງທີ່ປອດໄພ, ແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ຫຼື ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

**ມາດຕາ 19 (ໃໝ່) ກົດລະບຽບສຳລັບການຂັບຂີ່ຍານພາຫະນະທາງບົກຂ້າມທາງລົດໄຟ**

ຜູ້ຂັບຂີ່ຍານພາຫະນະທາງບົກ ສາມາດຂັບຂີ່ຂ້າມທາງລົດໄຟໄດ້ຢູ່ບ່ອນທາງຂ້າມລາງລົດໄຟ ທີ່ກຳນົດໄວ້ເທົ່ານັ້ນ ແລະ ຕ້ອງປ່ອຍທາງໃຫ້ຂະບວນລົດໄຟ ຫຼື ຫົວຈັກລົດໄຟ ໄປກ່ອນ.

ກ່ອນຈະຂັບຂີ່ຍານພາຫະນະທາງບົກຂ້າມທາງລົດໄຟ ຜູ້ຂັບຂີ່ ຕ້ອງປະຕິບັດຕາມ ປ້າຍສັນຍານ, ໄຟສັນຍານ, ເຄື່ອງໝາຍທາງ, ຕຳແໜ່ງສິ່ງກັ້ນທາງ, ສຽງສັນຍານເຕືອນຂອງລົດໄຟ ແລະ ການໃຫ້ສັນຍານຂອງຄົນຍາມທາງລົດໄຟ ແລະ ຕ້ອງໃຫ້ແນ່ໃຈວ່າບໍ່ມີລົດໄຟແລ່ນມາໃນໄລຍະໃກ້.

ເມື່ອເຫັນສັນຍານຫ້າມຂ້າມທາງລົດໄຟ ຜູ້ຂັບຂີ່ຍານພາຫະນະທາງບົກ ຕ້ອງຢຸດຢູ່ຫຼັງເສັ້ນຢຸດ, ຕໍ່ໜ້າປ້າຍຢຸດ ຫຼື ໄຟສັນຍານ, ຖ້າຫາກບໍ່ມີເສັ້ນໝາຍ, ບໍ່ມີປ້າຍ, ບໍ່ມີໄຟສັນຍານ ໃຫ້ຢຸດຫ່າງຈາກສິ່ງກັ້ນທາງ ຢ່າງໜ້ອຍຫ້າ ແມັດ ແລະ ຖ້າຫາກ ບໍ່ມີສິ່ງກັ້ນທາງ ໃຫ້ຢຸດຫ່າງຈາກລາງລົດໄຟຢ່າງໜ້ອຍ ສິບແມັດ.

**ມາດຕາ 20 (ໃໝ່) ກົດລະບຽບສຳລັບການຂັບຂີ່ຍານພາຫະນະທາງບົກຜ່ານທາງອຸໂມງ**

ຜູ້ຂັບຂີ່ຍານພາຫະນະທາງບົກ ກ່ອນຈະເຂົ້າທາງອຸໂມງ ຕ້ອງກວດເບິ່ງປະລິມານ ນ້ຳມັນເຊື້ອໄຟ, ອາຍແກັສ, ແສງອາທິດ, ໄຟຟ້າ ແລະ ໄນໂຕຣເຈນ, ເປີດໄຟຕາຕໍ່າເພື່ອຮັບປະກັນການແນມເຫັນ ແລະ ເຮັດໃຫ້ຜູ້ຂັບຂີ່ຍານພາຫະນະທາງບົກຄັນອື່ນແນມເຫັນຍານພາຫະນະທາງບົກຂອງຕົນ; ໃນໄລຍະແລ່ນຜ່ານທາງອຸໂມງຕ້ອງຮັບປະກັນຄວາມປອດໄພ ໂດຍຮັກສາໄລຍະຫ່າງ, ປະຕິບັດຕາມ ປ້າຍຈຳກັດຄວາມໄວ, ໄຟສັນຍານ, ປ້າຍ ແລະ ເຄື່ອງໝາຍ ຈະລາຈອນ, ໄປຕາມຊ່ອງຈະລາຈອນ, ບໍ່ໃຫ້ ຊີງຂຶ້ນໜ້າ, ຈອດ, ຢຸດ ຫຼື ຢຸດກະທັນ ຫັນ, ຖອຍຫຼັງ ຫຼື ລ້ຽວກັບ ແລະ ກຽມພ້ອມຮັບມືກັບທຸກສະພາບການທີ່ອາດມີການປ່ຽນແປງ.

ໃນກໍລະນີຍານພາຫະນະທາງບົກ ຕ້ອງຢຸດ ຫຼື ຈອດ ຍ້ອນສະພາບເຕັກນິກຂອງຍາພາຫະນະທາງບົກຂັດຂ້ອງ ຫຼື ມີເຫດການສຸກເສີນ ຜູ້ຂັບຂີ່ ຕ້ອງນຳເອົາຍານພາຫະນະທາງບົກໄປຈອດຢູ່ບ່ອນຈອດສຸກເສີນ. ຖ້າຫາກບໍ່ສາມາດເຄື່ອນຍ້າຍໄດ້ ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານສຸກເສີນ, ໄຟສັນຍານເຕືອນໄພຢູ່ດ້ານຫຼັງຂອງຍານພາຫະນະທາງບົກ, ວາງເຄື່ອງໝາຍ ໃນໄລຍະຫ່າງທີ່ປອດໄພ, ແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ຫຼື ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ໃບອະນຸຍາດຂັບຂີ່ ແລະ ການປະກັນໄພ ຍານພາຫະນະທາງບົກ

**ມາດຕາ 21 (ປັບປຸງ) ໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ**

ໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ ທີ່ ສປປ ລາວ ອອກໃຫ້ມີໃບອະນຸຍາດຂັບຂີ່ ພາຍໃນ ແລະ ລະຫວ່າງປະເທດ.

ໃບອະນຸຍາດຂັບຂີ່ຍານພາຫະນະທາງບົກພາຍໃນ ແມ່ນອອກໃຫ້ແກ່ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ທີ່ໄດ້ຜ່ານການສອບເສັງ ຢູ່ ສປປ ລາວ ເພື່ອນຳໃຊ້ຢູ່ພາຍໃນປະເທດ ແລະ ຢູ່ບັນດາປະເທດທີ່ມີການຮັບຮູ້ໃບຂັບຂີ່ຊຶ່ງກັນ ແລະ ກັນ. ໃບອະນຸຍາດຂັບຂີ່ຍານພາຫະນະທາງບົກພາຍໃນມີອາຍຸນຳໃຊ້ ຫ້າ ປີ ແລະ ສາມາດຕໍ່ໄດ້ຄັ້ງລະ ຫ້າ ປີ.

ໃບອະນຸຍາດຂັບຂີ່ຍານພາຫະນະທາງບົກລະຫວ່າງປະເທດ ແມ່ນອອກໃຫ້ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ທີ່ມີໃບອະນຸຍາດຂັບຂີ່ພາຍໃນມາແລ້ວ ເພື່ອນຳໃຊ້ຢູ່ຕ່າງປະເທດ.

ຂະໜາດ, ລັກສະນະ ແລະ ມາດຕະຖານ ຂອງໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 (ປັບປຸງ) ໃບອະນຸຍາດຂັບຂີ່ຍານພາຫະນະທາງບົກຕ່າງປະເທດ**

ໃບອະນຸຍາດຂັບຂີ່ຍານພາຫະນະທາງບົກຕ່າງປະເທດ ແມ່ນ ໃບອະນຸຍາດໃຫ້ຂັບຂີ່ຍານພາຫະນະ ຊຶ່ງອອກຢູ່ຕ່າງປະເທດ.

ຜູ້ຂັບຂີ່ຍານພາຫະນະທາງບົກ ທີ່ມີໃບອະນຸຍາດຂັບຂີ່ຍານພາຫະນະທາງບົກລະຫວ່າງປະເທດ ຫຼື ໃບຂັບຂີ່ຕ່າງປະເທດ ທີ່ມີສົນທິສັນຍາ ແລະ ສັນຍາສາກົນ ຮັບຮູ້ຊຶ່ງກັນ ແລະ ກັນ ສາມາດຂັບຂີ່ ຢູ່ ສປປ ລາວ.

**ມາດຕາ 23 (ປັບປຸງ) ເງື່ອນໄຂ ແລະ ລະບຽບການ ສອບເສັງເອົາໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ**

ຜູ້ມີຈຸດປະສົງສອບເສັງເອົາໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນການຈົບຫຼັກສູດການຮຽນ ຫຼື ການຝຶກອົບຮົມຂັບຂີ່ຍານພາຫະນະທາງບົກ ຈາກໂຮງຮຽນສອນຂັບຂີ່ຍານພາຫະນະທາງບົກ ຫຼື ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
2. ມີໃບຢັ້ງຢືນການກວດສຸຂະພາບ;
3. ມີອາຍຸຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດລະບຽບການສອບເສັງເອົາໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ ລວມທັງເງື່ອນໄຂການສອບເສັງເອົາໃບອະນຸຍາດຂັບຂີ່ຂອງ ຄົນພິການ ແລະ ຄົນເສຍອົງຄະ.

**ມາດຕາ 24 (ປັບປຸງ) ອາຍຸຂອງຜູ້ສອບເສັງເອົາໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ**

ຜູ້ສອບເສັງເອົາໃບອະນຸຍາດຂັບຂີ່ຍານພາຫະນະທາງບົກແຕ່ລະປະເພດ ຕ້ອງມີອາຍຸ ດັ່ງນີ້:

ກ. ຍານພາຫະນະທາງບົກປະເພດລົດຈັກ:

1. ແຕ່ສິບຫ້າປີຂຶ້ນໄປ ສາມາດສອບເສັງເອົາໃບອະນຸຍາດຂັບຂີ່ລົດທີ່ມີຄວາມແຮງບໍ່ເກີນ 125 ຊີຊີ;
2. ແຕ່ສິບແປດປີຂຶ້ນໄປ ສາມາດສອບເສັງເອົາໃບອະນຸຍາດຂັບຂີ່ລົດທີ່ມີຄວາມແຮງແຕ່ 125 ຊີຊີ ຫາ 250 ຊີຊີ;
3. ແຕ່ຊາວປີຂຶ້ນໄປ ສາມາດສອບເສັງເອົາໃບອະນຸຍາດຂັບຂີ່ລົດທີ່ມີຄວາມແຮງເກີນ 250 ຊີຊີ ຫາ 1.600 ຊີຊີ;

ຂ. ຍານພາຫະນະທາງບົກປະເພດລົດເບົາ ແລະ ລົດຂົນສົ່ງ:

1. ແຕ່ສິບແປດປີຂຶ້ນໄປ ສາມາດສອບເສັງເອົາໃບອະນຸຍາດຂັບຂີ່ປະເພດລົດເບົາ, ສຳລັບລົດຂົນສົ່ງສ່ວນຕົວ ແລະ ລົດຂົນສົ່ງສະເພາະ ຊຶ່ງມີບ່ອນນັ່ງບໍ່ເກີນເກົ້າບ່ອນນັ່ງ ລວມທັງບ່ອນນັ່ງຜູ້ຂັບຂີ່ ຫຼື ລົດຂົນສົ່ງສິນຄ້າທີ່ມີນໍ້າໜັກລວມບໍ່ເກີນ 3.500 ກິໂລກຣາມ, ລົດຂົນສົ່ງຜູ້ໂດຍສານບໍ່ເກີນສິບຫ້າບ່ອນນັ່ງ ລວມທັງບ່ອນນັ່ງຜູ້ຂັບຂີ່;
2. ແຕ່ຊາວເອັດປີຂຶ້ນໄປ ສາມາດສອບເສັງເອົາໃບອະນຸຍາດຂັບຂີ່ປະເພດລົດຂົນສົ່ງສິນຄ້າ ທີ່ມີນໍ້າໜັກລວມເກີນ 3.500 ກິໂລກຣາມ ຫາ 15.000 ກິໂລກຣາມ ແລະ ລົດຂົນສົ່ງຜູ້ໂດຍສານແຕ່ສິບຫົກ ຫາ ສາມສິບຫ້າ ບ່ອນນັ່ງ ລວມທັງບ່ອນນັ່ງຜູ້ຂັບຂີ່;
3. ແຕ່ຊາວສີ່ປີຂຶ້ນໄປ ສາມາດສອບເສັງເອົາໃບອະນຸຍາດຂັບຂີ່ປະເພດລົດຂົນສົ່ງສິນຄ້າ ທີ່ມີນໍ້າໜັກລວມເກີນ 15.000 ກິໂລກະລາມ ຫາ 50.500 ກິໂລກຣາມ ແລະ ລົດຂົນສົ່ງຜູ້ໂດຍສານແຕ່ ສາມສິບຫົກ ຫາ ສີ່ສິບຫ້າ ບ່ອນນັ່ງ ລວມທັງບ່ອນນັ່ງຜູ້ຂັບຂີ່;
4. ແຕ່ຊາວຫ້າປີຂຶ້ນໄປ ສາມາດສອບເສັງເອົາໃບອະນຸຍາດຂັບຂີ່ປະເພດ ລົດລາກ, ລົດພ່ວງ ທີ່ມີນໍ້າໜັກລວມແຕ່ 750 ກິໂລກຣາມ ຂຶ້ນໄປ.

**ມາດຕາ 25 (ປັບປຸງ) ໃບອະນຸຍາດຂັບຂີ່ຕາມປະເພດຍານພາຫະນະທາງບົກ**

ໃບອະນຸຍາດຂັບຂີ່ຕາມປະເພດຍານພາຫະນະທາງບົກ ກຳນົດດ້ວຍຕົວອັກສອນລາແຕງ ດັ່ງນີ້:

1. A: ລົດຈັກສອງລໍ້ ທີ່ມີຄວາມແຮງບໍ່ເກີນ 125 ຊີຊີ;
2. A1: ລົດຈັກສອງລໍ້ ທີ່ມີຄວາມແຮງເກີນ 125 ຊີຊີ ຫາ 250 ຊີຊີ;
3. A2: ລົດຈັກສອງລໍ້ ທີ່ມີຄວາມແຮງເກີນ 250 ຊີຊີ ຫາ 1.600 ຊີຊີ;
4. A3: ລົດສາມລໍ້ ທຸກປະເພດ;
5. B: ລົດເບົານໍ້າໜັກລວມບໍ່ເກີນ 3.500 ກິໂລກຣາມ, ບໍ່ເກີນເກົ້າບ່ອນນັ່ງລວມທັງບ່ອນນັ່ງຜູ້ຂັບຂີ່;
6. C: ລົດຂົນສົ່ງສິນຄ້າ ທີ່ມີນໍ້າໜັກລວມບໍ່ເກີນ 7.500 ກິໂລກຣາມ;
7. C1: ລົດຂົນສົ່ງສິນຄ້າ ທີ່ມີນໍ້າໜັກລວມບໍ່ເກີນ 15.000 ກິໂລກຣາມ;
8. C2: ລົດຂົນສົ່ງສິນຄ້າ ທີ່ມີນໍ້າໜັກລວມບໍ່ເກີນ 50.500 ກິໂລກຣາມ;

9. D: ລົດຂົນສົ່ງຜູ້ໂດຍສານປະເພດ 4 ລໍ້ ຂຶ້ນໄປ ທີ່ມີບ່ອນນັ່ງ ບໍ່ເກີນສິບຫ້າ ບ່ອນນັ່ງ ລວມທັງບ່ອນນັ່ງຜູ້ຂັບຂີ່;

10. D1: ລົດຂົນສົ່ງຜູ້ໂດຍສານປະເພດ 4 ລໍ້ ຂຶ້ນໄປ ທີ່ມີບ່ອນນັ່ງ ແຕ່ສິບຫົກ ຫາ ສາມສິບຫ້າ ບ່ອນນັ່ງ ລວມທັງບ່ອນນັ່ງຜູ້ຂັບຂີ່;

11. D2: ລົດຂົນສົ່ງຜູ້ໂດຍສານປະເພດ 4 ລໍ້ ຂຶ້ນໄປ ທີ່ມີບ່ອນນັ່ງແຕ່ ສາມສິບຫົກ ຫາ ສີ່ສິບຫ້າ ບ່ອນນັ່ງ ລວມທັງບ່ອນນັ່ງຜູ້ຂັບຂີ່;

12. E: ລົດເບົາ (B), ລົດຂົນສົ່ງສິນຄ້າ (C) ແລະ ລົດຂົນສົ່ງຜູ້ໂດຍສານ (D) ທີ່ແກ່ຫາງລາກ ທີ່ມີນ້ຳໜັກລວມບໍ່ເກີນ 750 ກິໂລກຣາມ;

13. E1 : ລົດຂົນສົ່ງສິນຄ້າ (C2) ແກ່ຫາງລາກ ທີ່ມີນ້ຳໜັກລວມເກີນ 750 ກິໂລກຣາມ.

**ມາດຕາ 26 (ປັບປຸງ) ການປະກັນໄພຍານພາຫະນະທາງບົກ**

ລົດທຸກຊະນິດ ທີ່ສັນຈອນຕາມທາງຫຼວງ ຕ້ອງມີການປະກັນໄພ ຕາມກົດໝາຍ ແລະ ລະບຽບການກ່ຽວກັບການປະກັນໄພ.

## ໝວດທີ 3
## ການຂັບຂີ່ຍານພາຫະນະທາງບົກ ແລະ ການບັນທຸກ

**ມາດຕາ 27 (ປັບປຸງ) ການຂັບຂີ່ຍານພາຫະນະທາງບົກ ແລະ ການບັນທຸກ**

ການຂັບຂີ່ ແລະ ການບັນທຸກ ຂອງ ຍານພາຫະນະ ແລະ ພາຫະນະ ທາງບົກ ໃຫ້ປະຕິບັດ ດັ່ງນີ້:

1. ລົດຖີບໃຫ້ຂີ່ຊ້ອນໄດ້ໜຶ່ງຄົນ, ລົດສາມລໍ້ຖີບໃຫ້ຂີ່ໄດ້ ສາມຄົນ ລວມທັງຜູ້ຂັບຂີ່;

2. ລົດຈັກ ສອງລໍ້, ສາມລໍ້ ແລະ ສີ່ລໍ້ ໃຫ້ຜູ້ໃຫຍ່ຊ້ອນໄດ້ໜຶ່ງຄົນ ແລະ ເດັກນ້ອຍອາຍຸບໍ່ເກີນສິບເອັດປີໜຶ່ງຄົນ, ລົດຈັກສາມລໍ້ຕິດຂ້າງ ໃຫ້ຂີ່ໄດ້ສາມຄົນ ລວມທັງຜູ້ຂັບຂີ່. ຜູ້ຂັບຂີ່ ແລະ ຜູ້ຊ້ອນທ້າຍ ຕ້ອງໃສ່ ໝວກກັນກະທົບທີ່ໄດ້ມາດຕະຖານ;

3. ລົດສາມລໍ້ຕິດເຄື່ອງຈັກໃຫ້ຂີ່ໄດ້ບໍ່ເກີນຫ້າຄົນ ຫຼື ບັນທຸກສິນຄ້າ, ເຄື່ອງຂອງບໍ່ເກີນ 300 ກິໂລ ກຣາມ; ລົດສາມລໍ້ຊະນິດຕຸກໆ ໃຫ້ຂີ່ໄດ້ບໍ່ເກີນເກົ້າຄົນ ຫຼື ບັນທຸກສິນຄ້າ, ເຄື່ອງຂອງບໍ່ເກີນ 550 ກິໂລກຣາມ;

4. ລົດເກງ, ລົດຈິບ, ລົດຕູ້ ແລະ ລົດກະບະ ໃຫ້ບັນທຸກຕາມມາດຕະຖານຂອງໂຮງງານຜະລິດ.

ຜູ້ຂັບຂີ່ລົດສີ່ລໍ້ຂຶ້ນໄປລວມທັງຜູ້ໂດຍສານ ຕ້ອງໃສ່ສາຍຮັດນິລະໄພ, ເດັກນ້ອຍທີ່ບໍ່ສາມາດໃສ່ສາຍຮັດນິລະໄພໄດ້ ໃຫ້ນຳໃຊ້ເບາະນັ່ງສະເພາະ.

**ມາດຕາ 28 (ປັບປຸງ) ຄວາມເຂັ້ມຂຸ້ນ ແລະ ປະລິມານທາດເຫຼົ້າ ໃນຮ່າງກາຍຂອງຜູ້ຂັບຂີ່ຍານພາຫະນະທາງບົກ**

ຄວາມເຂັ້ມຂຸ້ນ ແລະ ປະລິມານ ທາດເຫຼົ້າໃນຮ່າງກາຍຂອງຜູ້ຂັບຂີ່ລົດທຸກປະເພດທີ່ອະນຸຍາດສູງສຸດບໍ່ໃຫ້ເກີນ ດັ່ງນີ້:

1. ສຳລັບຜູ້ຂັບຂີ່ລົດສ່ວນຕົວສີ່ລໍ້ທຸກຊະນິດ:
   1) ໃນລົມຫາຍໃຈ 0.24 ມີລີກຣາມຕໍ່ລິດ;
   2) ໃນເລືອດ 50 ມີລີກຣາມ ຕໍ່ 100 ມີລີລິດ;
   3) ໃນປັດສະວະ 66.5 ມີລີກຣາມ ຕໍ່ 100 ມີລີລິດ.
2. ສຳລັບຜູ້ຂັບຂີ່ລົດຂົນສົ່ງຮັບຈ້າງທຸກຊະນິດ:
   1) ໃນລົມຫາຍໃຈ 0 ມີລີກຣາມຕໍ່ລິດ;
   2) ໃນເລືອດ 0 ມີລີກຣາມ ຕໍ່ 100 ມີລີລິດ;
   3) ໃນປັດສະວະ 0 ມີລີກຣາມ ຕໍ່ 100 ມີລີລິດ.
3. ສຳລັບຜູ້ຂັບຂີ່ລົດຈັກສອງລໍ້ ແລະ ສາມລໍ້:

1) ໃນລົມຫາຍໃຈ 0.14 ມີລີກຣາມຕໍ່ລິດ;

2) ໃນເລືອດ 30 ມີລີກຣາມ ຕໍ່ 100 ມີລີລິດ;

3) ໃນປັດສະວະ 39.9 ມີລີກຣາມ ຕໍ່ 100 ມີລີລິດ.

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ມີສິດກວດກາປະລິມານທາດເຫຼົ້າໃນລົມຫາຍໃຈຂອງຜູ້ຂັບຂີ່.

ໃນກໍລະນີເກີດອຸບປະຕິເຫດທີ່ເຮັດໃຫ້ມີຄົນ ບາດເຈັບ, ເສຍຊີວິດ ຫຼື ເຮັດໃຫ້ຊັບສິນເສຍຫາຍ ແພດມີໜ້າທີ່ກວດຫາປະລິມານທາດເຫຼົ້າໃນເລືອດ ຫຼື ປັດສະວະ ຂອງຜູ້ຂັບຂີ່ ແລະ ຄູ່ກໍລະນີ ທີ່ເກີດອຸບປະຕິເຫດ ເພື່ອໃຊ້ເປັນຂໍ້ມູນຫຼັກຖານໃຫ້ແກ່ການດໍາເນີນຄະດີ.

**ມາດຕາ 29 (ປັບປຸງ) ຄວາມໄວ ແລະ ໄລຍະຫ່າງ ຂອງຍານພາຫະນະທາງບົກທີ່ແລ່ນຕາມທາງຫຼວງ**

ຄວາມໄວສູງສຸດທີ່ອະນຸຍາດໃຫ້ລົດແຕ່ລະປະເພດແລ່ນຕາມທາງຫຼວງ ຢູ່ ສປປ ລາວ ໃຫ້ປະຕິບັດ ດັ່ງນີ້:

1. ບໍ່ເກີນຊາວກິໂລແມັດຕໍ່ຊົ່ວໂມງ ສໍາລັບທາງຮ່ອມໃນເຂດທີ່ຢູ່ອາໄສ;

2. ບໍ່ເກີນສີ່ສິບກິໂລແມັດຕໍ່ຊົ່ວໂມງ ສໍາລັບທາງຫຼວງ ທີ່ມີສອງຊ່ອງຈະລາຈອນໃນເຂດຕົວເມືອງ ແລະ ຊຸມຊົນ;

3. ບໍ່ເກີນຫົກສິບກິໂລແມັດຕໍ່ຊົ່ວໂມງ ສໍາລັບທາງຫຼວງໃນເຂດ ຕົວເມືອງ ແລະ ຊຸມຊົນ ທີ່ມີສີ່ຊ່ອງຈະລາຈອນຂຶ້ນໄປ;

4. ບໍ່ໃຫ້ເກີນເກົ້າສິບກິໂລແມັດຕໍ່ຊົ່ວໂມງ ສໍາລັບການສັນຈອນຂອງລົດເບົາທຸກປະເພດ ແລະ ລົດຈັກແຕ່ 125 ຊີຊີ ຂຶ້ນໄປ ຕາມທາງຫຼວງນອກເຂດຕົວເມືອງ;

5. ບໍ່ໃຫ້ເກີນເຈັດສິບກິໂລແມັດຕໍ່ຊົ່ວໂມງ ສໍາລັບລົດຂົນສົ່ງສິນຄ້າ, ລົດຂົນສົ່ງຜູ້ໂດຍສານ ແລະ ລົດຈັກບໍ່ເກີນ 125 ຊີຊີ ຕາມທາງຫຼວງນອກເຂດຕົວເມືອງ.

ນອກຈາກນີ້ ຄວາມໄວສູງສຸດທີ່ອະນຸຍາດໃຫ້ລົດແລ່ນຕາມທີ່ໄດ້ກໍານົດໄວ້ເທິງນີ້ແລ້ວ ຍັງຕ້ອງປະຕິບັດຕາມປ້າຍກໍານົດຄວາມໄວໃນແຕ່ລະຈຸດ.

ຄວາມໄວສູງສຸດທີ່ກໍານົດໄວ້ໃນມາດຕານີ້ ບໍ່ກວມເອົາຄວາມໄວຂອງການຈະລາຈອນພິເສດ, ເຫດການສຸກເສີນ ແລະ ໄພພິບັດ.

ຜູ້ຂັບຂີ່ຍານພາຫະນະທີ່ສັນຈອນໃນຊ່ອງຈະລາຈອນດຽວກັນ ຕ້ອງຮັກສາໄລຍະຫ່າງຈາກຄັນທີ່ຢູ່ທາງໜ້າໃຫ້ມີຄວາມ ພຽງພໍ ແລະ ເໝາະສົມ ກັບສະພາບທາງຫຼວງ, ຂະໜາດ, ນໍ້າໜັກບັນທຸກຂອງລົດ ແລະ ສະພາບດິນຟ້າອາກາດ ເພື່ອຮັບປະກັນຄວາມປອດໄພ ໃນກໍລະນີລົດຄັນທີ່ແລ່ນທາງໜ້າຢຸດກະທັນຫັນ.

**ມາດຕາ 30 (ໃໝ່) ຄວາມໄວ ແລະ ໄລຍະຫ່າງ ຂອງຍານພາຫະນະທາງບົກທີ່ແລ່ນຕາມທາງດ່ວນ**

ຄວາມໄວຂອງຍານພາຫະນະທາງບົກທີ່ແລ່ນຕາມທາງດ່ວນ ໃຫ້ປະຕິບັດ ດັ່ງນີ້:

1. ລົດເບົາທຸກປະເພດ ໃຫ້ແລ່ນດ້ວຍຄວາມໄວແຕ່ ແປດສິບ ຫາ ໜຶ່ງຮ້ອຍສິບ ກິໂລແມັດຕໍ່ຊົ່ວໂມງ ແລະ ຕ້ອງຮັກສາໄລຍະຫ່າງ ຢ່າງໜ້ອຍ ໜຶ່ງຮ້ອຍ ແມັດ.

2. ລົດບັນທຸກນໍ້າໜັກລວມເກີນ 3.500 ກິໂລກຣາມ ແລະ ລົດຂົນສົ່ງຜູ້ໂດຍສານ ໃຫ້ແລ່ນດ້ວຍຄວາມໄວແຕ່ ເຈັດສິບ ຫາ ເກົ້າສິບ ກິໂລແມັດຕໍ່ຊົ່ວໂມງ ແລະ ຕ້ອງຮັກສາໄລຍະຫ່າງ ຢ່າງໜ້ອຍ ເຈັດສິບ ແມັດ.

ໃນກໍລະນີຫາກມີລົມແຮງ, ຝົນຕົກ ແລະ ໝອກ ເຮັດໃຫ້ໜ້າທາງໝື່ນ ແລະ ແນມເຫັນບໍ່ແຈ້ງ ຜູ້ຂັບຂີ່ຍານພາຫະນະ ຕ້ອງຫຼຸດຜ່ອນຄວາມໄວ ແລະ ຮັກສາໄລຍະຫ່າງຕາມຫຼັງກັນໃຫ້ເໝາະສົມ ເພື່ອຮັບປະກັນຄວາມປອດໄພ.

**ມາດຕາ 31 (ໃໝ່) ການຈະລາຈອນຂອງຍານພາຫະນະຂົນສົ່ງສິນຄ້າ ຫຼື ວັດຖຸເຄື່ອງຂອງ ຂະໜາດໃຫຍ່ພິເສດ ແລະ ສິນຄ້າອັນຕະລາຍ**

ການຈະລາຈອນຂອງຍານພາຫະນະຂົນສົ່ງສິນຄ້າ ຫຼື ວັດຖຸເຄື່ອງຂອງ ຂະໜາດໃຫຍ່ພິເສດ ແລະ ສິນຄ້າອັນຕະລາຍ ໃຫ້ປະຕິບັດ ດັ່ງນີ້:

1. ຈະລາຈອນຕາມທາງຫຼວງ ສະເພາະໃນເວລາກາງເວັນ ແລະ ຕາມເສັ້ນທາງທີ່ໄດ້ກຳນົດ;
2. ແລ່ນດ້ວຍຄວາມໄວບໍ່ເກີນ ສີ່ສິບ ກິໂລແມັດຕໍ່ຊົ່ວໂມງ;
3. ມີລົດເຈົ້າໜ້າທີ່ຕຳຫຼວດທາງຫຼວງນຳໜ້າຂະບວນ.

**ມາດຕາ 32 (ປັບປຸງ) ການເຄື່ອນຍ້າຍຍານພາຫະນະກົນຈັກໜັກ**

ການເຄື່ອນຍ້າຍຍານພາຫະນະກົນຈັກໜັກ ຕາມທາງຫຼວງ ຕ້ອງນຳໃຊ້ຍານພາຫະນະບັນທຸກທີ່ຖືກຕ້ອງ ຕາມມາດຕະຖານເຕັກນິກ; ຖ້າຫາກມີສ່ວນທີ່ລື່ນອອກ ຈາກຍານພາຫະນະລາກແກ່ ໃຫ້ຕິດເຄື່ອງໝາຍ ຫຼື ສັນຍາລັກເຕືອນອັນຕະລາຍ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 33 (ໃໝ່) ການຈະລາຈອນຂອງຍານພາຫະນະທາງບົກເປັນຂະບວນ**

ການຈະລາຈອນຂອງຍານພາຫະນະທາງບົກເປັນຂະບວນ ມີ ດັ່ງນີ້:

1. ຂະບວນຄາລະວານ ທີ່ເປັນລົດ ເກັງ, ກະບະ, ຈິບ ແລະ ຕູ້ ຂະບວນໜຶ່ງບໍ່ໃຫ້ເກີນ ສິບຫ້າ ຄັນ, ລົດທີ່ນຳໜ້າຂະບວນຕ້ອງເປີດໄຟຕາຕ່ຳ ແລະ ຮັກສາໄລຍະຫ່າງຕາມຫຼັງກັນຢ່າງໜ້ອຍ ຊາວຫ້າ ແມັດ. ໃນກໍລະນີມີຫຼາຍຂະບວນເດີນທາງໄປຈຸດໝາຍດຽວກັນ ແລະ ທາງດຽວກັນ ໃຫ້ປ່ອຍລົດແຕ່ລະຂະບວນຫ່າງກັນ ສິບຫ້າ ນາທີ;

2. ຂະບວນລົດຂົນສົ່ງສິນຄ້າ ປະເພດລົດລາກ ບໍ່ໃຫ້ເກີນ ສີ່ ຄັນ, ມີລົດປະເພດລົດເບົານຳຂະບວນທີ່ເປີດໄຟສັນຍານໝຸນສີເຫຼືອງ ແລະ ມີປ້າຍຂໍ້ຄວາມຂະບວນລົດລາກ ແລະ ໃຫ້ຮັກສາໄລຍະຫ່າງຕາມຫຼັງກັນຢ່າງໜ້ອຍ ຫ້າສິບ ແມັດ. ໃນກໍລະນີມີຫຼາຍຂະບວນເດີນທາງໄປຈຸດໝາຍດຽວກັນ ແລະ ທາງດຽວກັນ ໃຫ້ປ່ອຍລົດແຕ່ລະຂະບວນຫ່າງກັນ ສາມສິບ ນາທີ;

3. ຂະບວນລົດຂົນສົ່ງນັກທ່ອງທ່ຽວ ບໍ່ໃຫ້ເກີນ ຫ້າ ຄັນ, ມີລົດນຳໜ້າຂະບວນທີ່ເປີດໄຟຕາຕ່ຳ ແລະ ຮັກສາໄລຍະຫ່າງຕາມຫຼັງກັນຢ່າງໜ້ອຍ ສາມສິບ ແມັດ. ໃນກໍລະນີມີຫຼາຍຂະບວນເດີນທາງໄປຈຸດໝາຍດຽວກັນ ແລະ ທາງດຽວກັນ ໃຫ້ປ່ອຍລົດແຕ່ລະຂະບວນຫ່າງກັນ ຊາວ ນາທີ;

4. ຂະບວນຄາລາວານທີ່ເປັນລົດຈັກ ໃຫ້ຂັບຂີ່ເປັນແຖວດຽວ ຫຼື ຮຽງກັນໃນຊ່ອງຈະລາຈອນດຽວກັນ, ບໍ່ໃຫ້ເກີນ ຫ້າສິບ ຄັນ, ມີລົດປະເພດລົດເບົານຳຂະບວນທີ່ເປີດໄຟສັນຍານ ແລະ ມີປ້າຍຂໍ້ຄວາມຂະບວນລົດຈັກ ແລະ ໃຫ້ຮັກສາໄລຍະຫ່າງຕາມຫຼັງກັນຢ່າງໜ້ອຍ ສິບ ແມັດ. ໃນກໍລະນີມີຫຼາຍຂະບວນເດີນທາງໄປຈຸດໝາຍດຽວກັນ ແລະ ທາງດຽວກັນ ໃຫ້ປ່ອຍລົດແຕ່ລະຂະບວນຫ່າງກັນ ສິບຫ້າ ນາທີ.

**ມາດຕາ 34 (ໃໝ່) ຍານພາຫະນະ ແລະ ພາຫະນະ ທີ່ສັນຈອນຕາມທາງຫຼວງ**

ຍານພາຫະນະ ແລະ ພາຫະນະ ທີ່ສັນຈອນຕາມທາງຫຼວງ ຕ້ອງຮັບປະກັນ ດັ່ງນີ້:

1. ໄດ້ມາດຕະຖານເຕັກນິກດ້ານຄວາມປອດໄພ;
2. ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງຄົນ;
3. ມີ ອຸປະກອນຕິດຕາມການເດີນທາງ ແລະ ອຸປະກອນເພື່ອບັນທຶກພາບຂອງຜູ້ຂັບຂີ່ຍານພາຫະນະຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 35 (ປັບປຸງ) ການສ້ອມແປງຍານພາຫະນະ ທີ່ສັນຈອນຕາມທາງຫຼວງ**

ການສ້ອມແປງຍານພາຫະນະ ທີ່ ຂັດຂ້ອງ ຫຼື ເປ່ເພ ຕາມທາງຫຼວງ ຕ້ອງບໍ່ໃຫ້ກີດຂວາງການຈະລາຈອນ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຮັບປະກັນຄວາມປອດໄພ ຂອງການຈະລາຈອນຕາມທາງຫຼວງ.

## ໝວດທີ 4
## ລະບົບສັນຍານຈະລາຈອນ

**ມາດຕາ 36 (ປັບປຸງ) ລະບົບສັນຍານຈະລາຈອນ**

ລະບົບສັນຍານຈະລາຈອນ ປະກອບດ້ວຍ:

1. ປ້າຍຈະລາຈອນ;
2. ສັນຍານຈະລາຈອນ;
3. ເຄື່ອງໝາຍຈະລາຈອນ.

ລະບົບສັນຍານຈະລາຈອນ ຕ້ອງເປັນລະບົບດຽວໃນຂອບເຂດທົ່ວປະເທດ. ຜູ້ຂັບຂີ່ຕ້ອງປະຕິບັດຕາມ ລະບຽບການກ່ຽວກັບກິດຈະລາຈອນທາງບົກ ຢ່າງເຂັ້ມງວດ.

**ມາດຕາ 37 (ປັບປຸງ) ປ້າຍຈະລາຈອນ**

ປ້າຍຈະລາຈອນ ແມ່ນເຄື່ອງໝາຍຊີ້ບອກໃຫ້ປະຕິບັດຕາມລະບຽບການກ່ຽວກັບກິດຈະລາຈອນ ທາງບົກຕາມທາງຫຼວງ ຊຶ່ງປະກອບດ້ວຍໝວດປ້າຍຕ່າງໆ ດັ່ງນີ້:

1. ປ້າຍເຕືອນອັນຕະລາຍ;
2. ປ້າຍບອກສິດ;
3. ປ້າຍຫ້າມ;
4. ປ້າຍກຳນົດ ຫຼື ປ້າຍບັງຄັບ;
5. ປ້າຍກຳນົດລະບຽບການສະເພາະ;
6. ປ້າຍແນະນຳທາງ ຫຼື ທີ່ຕັ້ງ;
7. ປ້າຍບໍລິການ;
8. ປ້າຍເພີ່ມ.

ສຳລັບ ຮູບແບບ, ສັນຍາລັກ ແລະ ຄວາມໝາຍ ຂອງແຕ່ລະໝວດປ້າຍຈະລາຈອນ ໄດ້ກຳນົດໄວ້ໃນ ລະບຽບການກ່ຽວກັບກິດຈະລາຈອນທາງບົກ.

**ມາດຕາ 38 (ປັບປຸງ) ສັນຍານຈະລາຈອນ**

ສັນຍານຈະລາຈອນ ແມ່ນການຊີ້ບອກການສັນຈອນຕາມທາງຫຼວງ ດ້ວຍ ແສງໄຟ, ສີ, ສຽງ, ຄົນ ແລະ ຫຸ່ນຈຳລອງ.

ສັນຍານດ້ວຍແສງໄຟປະກອບດ້ວຍ ສາມ ສີ ດັ່ງນີ້:

1. ໄຟສີແດງ ແມ່ນຫ້າມສັນຈອນ;
2. ໄຟສີເຫຼືອງ ແມ່ນໃຫ້ລະວັງ, ກຽມຢຸດ;
3. ໄຟສີຂຽວ ແມ່ນໃຫ້ການສັນຈອນໄດ້.

**ມາດຕາ 39 (ປັບປຸງ) ເຄື່ອງໝາຍຈະລາຈອນທາງບົກ**

ເຄື່ອງໝາຍຈະລາຈອນທາງບົກ ແມ່ນ ເຄື່ອງໝາຍທີ່ ຕິດຕັ້ງ, ຂີດ, ຂຽນ, ແຕ້ມໄວ້ຕາມໜ້າທາງ, ປ່າທາງ, ແຄມທາງ, ເທິງທາງຫຼວງ, ຫຼັກໝາຍ, ຮາວປ້ອງກັນຄວາມປອດໄພ, ລູກສອນຊີ້ບອກທິດທາງ, ເສັ້ນແບ່ງທິດທາງການສັນຈອນ, ເສັ້ນໃຈກາງທາງ, ເສັ້ນແບ່ງຊ່ອງຈະລາຈອນ, ເສັ້ນທາງມ້າລາຍ ແລະ ອື່ນໆ ເພື່ອເຕືອນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈະລາຈອນ.

ເຄື່ອງໝາຍຈະລາຈອນທາງບົກ ປະກອບດ້ວຍ:

1. ເຄື່ອງໝາຍຈະລາຈອນທາງບົກຕາມລວງນອນ;
2. ເຄື່ອງໝາຍຈະລາຈອນທາງບົກຕາມລວງຕັ້ງ.

**ມາດຕາ 40 (ປັບປຸງ) ການຕິດຕັ້ງລະບົບສັນຍານຈະລາຈອນ**

ປ້າຍ, ສັນຍານ ແລະ ເຄື່ອງໝາຍ ຈະລາຈອນ ຕ້ອງມີຄຸນນະພາບຕາມມາດຕະຖານເຕັກນິກ, ໄດ້ຮັບການຕິດຕັ້ງ ແລະ ຄຸ້ມຄອງ ຢ່າງຖືກຕ້ອງ ຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ສ່ວນການສັນຍານຈະລາຈອນດ້ວຍ ຄົນ ແລະ ຫຸ່ນຈໍາລອງ ຕ້ອງປະຕິບັດຕາມລະບຽບການຂອງກະຊວງປ້ອງກັນຄວາມສະຫງົບ.

## ໝວດທີ 5
## ໄຟສັນຍານເທິງຫຼັງຄາລົດ

**ມາດຕາ 41 (ໃໝ່) ໄຟສັນຍານເທິງຫຼັງຄາລົດ**

ໄຟສັນຍານເທິງຫຼັງຄາລົດມີສອງປະເພດ ດັ່ງນີ້:

1. ໄຟສັນຍານເທິງຫຼັງຄາລົດທີ່ມີອະພິສິດ;
2. ໄຟສັນຍານເທິງຫຼັງຄາລົດພິເສດ.

**ມາດຕາ 42 (ໃໝ່) ໄຟສັນຍານເທິງຫຼັງຄາລົດທີ່ມີອະພິສິດ**

ໄຟສັນຍານເທິງຫຼັງຄາລົດທີ່ມີອະພິສິດ ແມ່ນ ໄຟສັນຍານທີ່ຕິດຕັ້ງຢູ່ເທິງຫຼັງຄາລົດ ນໍາໜ້າຂະບວນຜູ້ນໍາພັກ-ລັດ, ແຂກຕ່າງປະເທດ, ລົດທີ່ນໍາໃຊ້ເຂົ້າໃນວຽກງານວິຊາສະເພາະຈໍາເພາະຂອງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ລົດ ມອດໄຟ, ແພດ ແລະ ກູ້ໄພ ສຸກເສີນ.

**ມາດຕາ 43 (ໃໝ່) ໄຟສັນຍານເທິງຫຼັງຄາລົດພິເສດ**

ໄຟສັນຍານເທິງຫຼັງຄາລົດພິເສດ ແມ່ນ ໄຟສັນຍານທີ່ຕິດຕັ້ງຢູ່ເທິງຫຼັງຄາລົດ ໜ່ວຍປະຕິບັດການໄຟຟ້າ, ລ້ຽງສັດ, ການປະມົງ, ຂົນສົ່ງສິນຄ້າ, ກໍ່ສ້າງ, ສ້ອມແປງທາງຫຼວງ ແລະ ອະນາໄມຕົວເມືອງ.

**ມາດຕາ 44 (ໃໝ່) ການອະນຸຍາດຕິດຕັ້ງ ແລະ ນໍາໃຊ້ ໄຟສັນຍານເທິງຫຼັງຄາລົດ**

ການຕິດຕັ້ງໄຟສັນຍານເທິງຫຼັງຄາລົດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ.

ສໍາລັບລາຍລະອຽດກ່ຽວກັບການນໍາໃຊ້ ສີ, ສຽງ, ແສງ ທີ່ຕິດຕັ້ງເທິງຫຼັງຄາລົດ ໃຫ້ປະຕິບັດຕາມລະບຽບການກ່ຽວກັບກົດຈະລາຈອນທາງບົກ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

## ໝວດທີ 6
## ການຄວບຄຸມການຈະລາຈອນທາງບົກ

**ມາດຕາ 45 (ປັບປຸງ) ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ**

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ປະກອບດ້ວຍ:

1. ເຈົ້າໜ້າທີ່ຕໍາຫຼວດຈະລາຈອນ ມີໜ້າທີ່ອໍານວຍຄວາມສະດວກ, ຄວບຄຸມ ແລະ ກວດກາ ການຈະ ລາຈອນໃນຕົວເມືອງ;

2. ເຈົ້າໜ້າທີ່ຕໍາຫຼວດທາງຫຼວງ ມີໜ້າທີ່ອໍານວຍຄວາມສະດວກ, ຄວບຄຸມ ແລະ ກວດກາ ການຈະລາຈອນນອກຕົວເມືອງ;

3. ເຈົ້າໜ້າທີ່ກວດກາການຂົນສົ່ງ ມີໜ້າທີ່ກວດກາເຕັກນິກການຂົນສົ່ງ, ມາດຕະຖານເຕັກນິກຍານພາຫະນະຂົນສົ່ງທຸກປະເພດ, ກິດຈະການຂົນສົ່ງ ຕາມທາງຫຼວງ ແລະ ໂຄງລ່າງພື້ນຖານດ້ານການຂົນສົ່ງ;

4. ຜູ້ທີ່ໄດ້ຮັບມອບໝາຍ ໃຫ້ຄວບຄຸມການຈະລາຈອນທາງບົກ ມີໜ້າທີ່ອໍານວຍຄວາມສະດວກສະເພາະໃດໜຶ່ງ.

**ມາດຕາ 46 (ປັບປຸງ) ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ**

ໃນເວລາປະຕິບັດໜ້າທີ່ ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຕ້ອງ ນຸ່ງເຄື່ອງແບບ, ຕິດກາໝາຍ, ເຄື່ອງໝາຍ, ກາຊື່, ມີຈຳນວນເຈົ້າໜ້າທີ່ຢ່າງໜ້ອຍສາມຄົນ ພ້ອມທັງມີເຄື່ອງມື ແລະ ອຸປະກອນທີ່ຈຳເປັນ ແລະ ປະຕິບັດຕາມລະບຽບການຂອງກະຊວງປ້ອງກັນຄວາມສະຫງົບ, ກະຊວງໂຍທາທິການ ແລະ ຂົນສົ່ງ ຢ່າງເຂັ້ມງວດ.

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຕ້ອງແກ້ໄຂຢ່າງທັນການໃນກໍລະນີເກີດອຸບປະຕິເຫດ, ມີສິ່ງກີດຂວາງ, ການສັນຈອນສັບສົນ ຫຼື ມີການສັນຈອນພິເສດ.

ໃນເວລາຄວບຄຸມການຈະລາຈອນທາງບົກ ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ມີສິດເໜືອກວ່າລະບົບສັນຍານຈະລາຈອນ.

**ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ຕຳຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ**

ເຈົ້າໜ້າທີ່ ຕຳຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ອຳນວຍຄວາມສະດວກ, ຄວບຄຸມ ແລະ ລະບາຍການສັນຈອນ ໃນຊົ່ວໂມງເລັ່ງດ່ວນ ແລະ ບ່ອນທີ່ມີການຈະລາຈອນແອອັດ;
2. ກວດກາ ສະພາບຂອງຜູ້ຂັບຂີ່, ເອກະສານ, ທາດເຫຼົ້າໃນຮ່າງກາຍ, ສານເສບຕິດ ຂອງຜູ້ຂັບຂີ່, ເອກະສານ ແລະ ຄວາມໄວ ຂອງລົດທຸກປະເພດ;
3. ກັກຕົວຜູ້ຂັບຂີ່ ພ້ອມທັງລົດ ທີ່ລະເມີດກົດຈະລາຈອນພາໃຫ້ເກີດອຸປະຕິເຫດ ຊຶ່ງເຮັດໃຫ້ມີຄົນບາດເຈັບສາຫັດ ຫຼື ເສຍຊີວິດ ແລະ ນຳຕົວຜູ້ຫຼົບໜີອອກຈາກອຸປະຕິເຫດ ເພື່ອມາດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ;
4. ຕິດຕາມ, ກວດກາເອກະສານລົດຕ່າງປະເທດ ທີ່ມາເຄື່ອນໄຫວ ຢູ່ ສປປ ລາວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ກັກລົດທີ່ບໍ່ມີ ໃບທະບຽນ, ປ້າຍທະບຽນ ຫຼື ໃບທະບຽນ ແລະ ປ້າຍທະບຽນ ທີ່ບໍ່ຖືກຕ້ອງ ພ້ອມທັງ ກັກລົດ ທີ່ພົວພັນກັບການລະເມີດກົດໝາຍ;
6. ປົກປັກຮັກສາ ລົດທີ່ຖືກກັກ, ວັດຖຸສິ່ງຂອງຜູ້ຂັບຂີ່ ແລະ ວັດຖຸປະກອນທີ່ພົວພັນກັບການລະເມີດກົດໝາຍ ພ້ອມທັງເຮັດບົດບັນທຶກໄວ້ເພື່ອເປັນຫຼັກຖານ;
7. ຍົກຍໍ່, ລາກ, ລ໋ອກລໍ້ ລົດທີ່ຈອດບໍ່ຖືກຕ້ອງຕາມລະບຽບການກ່ຽວກັບກົດຈະລາຈອນທາງບົກ ພ້ອມທັງອະນຸຍາດໃຫ້ຜູ້ດຳເນີນການບໍລິການລາກແກ່ຍານພາຫະນະທາງບົກ ຍົກຍໍ່, ລາກແກ່ ຍານພາຫະນະ ດັ່ງກ່າວ;
8. ກວດກາ ສຽງດັງ, ໄຟຕາ ໜ້າ ແລະ ຫຼັງ, ໄຟສັນຍານ, ສຽງແກ, ຄວັນດຳ, ຄວັນຂາວ ຂອງລົດຈັກ, ລົດເບົາ ທີ່ ຜິດປົກກະຕິ ແລະ ດັດແປງສະພາບເຕັກນິກ ທີ່ສັນຈອນຕາມທາງຫຼວງ;
9. ເກັບກຳຂໍ້ມູນ, ຕິດຕາມຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບກົດຈະລາຈອນທາງບົກ ແລະ ແຈ້ງເຫດການ ໃຫ້ເຈົ້າໜ້າທີ່ໜ່ວຍປະຕິບັດການພາກສະໜາມ;
10. ຊັນນະສູດວັດແທກ, ບັນທຶກເຫດການ, ຖ່າຍ ຮູບ, ວີດີໂອ ແລະ ແຕ້ມແຜນວາດດຽວ ໃຫ້ລະອຽດ, ຊັດເຈນ, ຄົບຖ້ວນ ກ່ຽວກັບສະຖານທີ່ເກີດເຫດ ລວມທັງສອບຖາມຜູ້ກ່ຽວຂ້ອງ ແລະ ພະຍານ ທີ່ຢູ່ໃນເຫດການ ຢ່າງທັນການ;
11. ສຶກສາອົບຮົມ, ປັບໃໝ ຫຼື ດຳເນີນຄະດີຕໍ່ ຜູ້ລະເມີດ ກົດໝາຍ ແລະ ລະບຽບການ;
12. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ກວດກາການຂົນສົ່ງທາງບົກ ໃນການປະຕິບັດໜ້າທີ່ຄວບຄຸມ ແລະ ກວດກາການຂົນສົ່ງທາງບົກ ຕາມທາງຫຼວງ;
13. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາການຂົນສົ່ງທາງບົກ**

ເຈົ້າໜ້າທີ່ກວດກາການຂົນສົ່ງທາງບົກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ອໍານວຍຄວາມສະດວກ, ຄວບຄຸມ ແລະ ກວດກາ ການດໍາເນີນທຸລະກິດຂົນສົ່ງທາງບົກ, ສະພາບເຕັກນິກລົດ, ການບັນທຸກຂອງລົດຂົນສົ່ງທຸກປະເພດ, ຜູ້ຂັບຂີ່ ແລະ ພະນັກງານປະຈໍາຂອງລົດຂົນສົ່ງຮັບຈ້າງ ແລະ ຂົນສົ່ງສະເພາະ;

2. ກວດກາ ສິ່ງອໍານວຍຄວາມສະດວກ, ສິ່ງກີດຂວາງການຈະລາຈອນ ແລະ ສະພາບການຂົນສົ່ງ ຕາມທາງຫຼວງ;

3. ກວດກາ ຄວັນດໍາ, ຄວັນຂາວ ຂອງລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຕາມທາງຫຼວງ;

4. ກວດກາລົດຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ທີ່ມີນໍ້າໜັກເກີນ, ດັດແປງສະພາບເຕັກນິກ ທີ່ສັນຈອນຕາມທາງຫຼວງ;

5. ກວດກາ ເອກະສານ, ເຕັກນິກ ແລະ ຕິດຕາມ ສາຍທາງ ຂອງລົດຂົນສົ່ງຜູ້ໂດຍສານ ແລະ ສິນຄ້າຕ່າງປະເທດ ທີ່ມາເຄື່ອນໄຫວ ຢູ່ ສປປ ລາວ ໃຫ້ຖືກຕ້ອງ ຕາມ ກົດໝາຍ ແລະ ລະບຽບການ;

6. ຕິດຕາມ ກວດກາ ການດໍາເນີນທຸລະກິດ ກ່ຽວກັບການຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ບໍ່ຖືກຕ້ອງຕາມປະເພດທີ່ໄດ້ຮັບອະນຸຍາດ;

7. ສຶກສາອົບຮົມ, ປັບໃໝ ຫຼື ດໍາເນີນຄະດີຕໍ່ ຜູ້ລະເມີດ ກົດໝາຍ ແລະ ລະບຽບການ;

8. ປະສານສົມທົບ ກັບເຈົ້າໜ້າທີ່ ຕໍາຫຼວດຈະລາຈອນ, ຕໍາຫຼວດທາງຫຼວງ ໃນການອໍານວຍຄວາມສະດວກ, ຄວບຄຸມ ແລະ ຈັດສັນ ຄວາມເປັນລະບຽບຮຽບຮ້ອຍຂອງການຈະລາຈອນທາງບົກ ຕາມທາງຫຼວງ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ທີ່ໄດ້ຮັບມອບໝາຍໃຫ້ຄວບຄຸມການຈະລາຈອນທາງບົກ**

ຜູ້ທີ່ໄດ້ຮັບມອບໝາຍໃຫ້ຄວບຄຸມການຈະລາຈອນທາງບົກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄວບຄຸມ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການຈະລາຈອນ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໂຄງການກໍ່ສ້າງໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ;

2. ຄວບຄຸມ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການຈະລາຈອນ ໃນການຈັດກິດຈະກໍາທາງສັງ ຄົມ , ພິທີການ, ພິທີກໍາ ໃນໄລຍະເວລາໃດໜຶ່ງ;

3. ຄວບຄຸມ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການຈະລາຈອນ ໃນເຂດຊຸມຊົນ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ຕະຫຼາດ, ໂຮງຈັກໂຮງງານ;

ໃນເວລາປະຕິບັດໜ້າທີ່ ຕ້ອງນຸ່ງເສື້ອສະທ້ອນແສງ (ຖ້າມີ), ຖືທຸງທິວ, ມີໝາກຫວີດ ແລະ ອຸປະ ກອນອື່ນທີ່ຈໍາເປັນ.

**ມາດຕາ 50 (ປັບປຸງ) ການ ກວດກາ ແລະ ແກ້ໄຂອຸບປະຕິເຫດຕາມທາງຫຼວງ**

ເຈົ້າໜ້າທີ່ຕໍາຫຼວດຈະລາຈອນ ຫຼື ຕໍາຫຼວດທາງຫຼວງ ຕ້ອງ ຮີບຮ້ອນ ຊັນນະສູດວັດແທກ, ບັນທຶກເຫດການ, ຖ່າຍ ຮູບ, ວີດີໂອ ແລະ ແຕ້ມແຜນວາດດຽວ ໃຫ້ລະອຽດ, ຊັດເຈນ ແລະ ຄົບຖ້ວນ ກ່ຽວກັບສະຖານທີ່ເກີດເຫດ ພ້ອມທັງເກັບກໍາຂໍ້ມູນ ນໍາຜູ້ທີ່ກ່ຽວຂ້ອງ ແລະ ພະຍານ ທີ່ຢູ່ໃນເຫດການ ຢ່າງທັນການ ໃນເວລາເກີດອຸບປະຕິເຫດ ເພື່ອດໍາເນີນການແກ້ໄຂຕາມ ກົດໝາຍ ແລະ ລະບຽບການ ພ້ອມທັງເຄື່ອນຍ້າຍລົດ ແລະ ສິ່ງກີດຂວາງອອກຈາກພື້ນທີ່ເກີດອຸບປະຕິເຫດ ຢ່າງຮີບດ່ວນ.

ໃນກໍລະນີ ລົດຂົນສົ່ງສິນຄ້າອັນຕະລາຍ ເກີດອຸບປະຕິເຫດ ໃຫ້ປະຕິບັດ ດັ່ງນີ້:

1. ສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ເພື່ອ ປະກາດ ແລະ ຍົກຍ້າຍປະຊາຊົນ ຜູ້ທີ່ຢູ່ອາໄສ ໃນເຂດໃກ້ຄຽງອອກຈາກບໍລິເວນ ທີ່ເກີດອຸບປະຕິເຫດ;

2. ກຳນົດຂອບເຂດ, ວາງ ເຄື່ອງໝາຍ ແລະ ສິ່ງປ້ອງກັນຄວາມປອດໄພ ຢູ່ບໍລິເວນ ທີ່ເກີດອຸບປະຕິເຫດ;

3. ປິດທາງການສັນຈອນທີ່ເຊື່ອມຕໍ່ ຫຼື ຜ່ານຈຸດທີ່ເກີດອຸບປະຕິເຫດທັງໝົດຈົນກວ່າຈະໄດ້ຮັບການແກ້ໄຂ, ແຈ້ງໜ່ວຍງານວິຊາການທີ່ກ່ຽວຂ້ອງ ແລະ ກູ້ໄພ ເພື່ອດຳເນີນການແກ້ໄຂ ຢ່າງຮີບດ່ວນ.

ສຳລັບລາຍລະອຽດກ່ຽວກັບການກວດກາ ແລະ ແກ້ໄຂອຸບປະຕິເຫດ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງ ປ້ອງກັນຄວາມສະຫງົບ.

## ໝວດທີ 7
## ການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ

**ມາດຕາ 51 (ປັບປຸງ) ການກວດສອບຄວາມປອດໄພທາງຫຼວງຂອງໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ**

ທຸກໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ຕ້ອງໄດ້ຜ່ານການກວດສອບຄວາມປອດໄພທາງຫຼວງ ຕາມລະບຽບການ ເພື່ອຮັບປະກັນການຈະລາຈອນ ໃຫ້ມີຄວາມປອດໄພ.

ສຳລັບລາຍລະອຽດກ່ຽວກັບການກວດສອບແຕ່ລະຂັ້ນຕອນ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 52 (ປັບປຸງ) ການຮັບປະກັນຄວາມປອດໄພທາງຫຼວງໃນເວລາ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ**

ໃນເວລາ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ຕ້ອງ ຕິດຕັ້ງ ປ້າຍຈະລາຈອນ, ເຄື່ອງໝາຍເຕືອນສະທ້ອນແສງ ທີ່ສາມາດແນມເຫັນ ຢ່າງສະດວກ ແລະ ຈະແຈ້ງໃນໄລຍະໄກ, ຕິດຕັ້ງໄຟແສງສະ ຫວ່າງ ແລະ ໄຟສັນຍານເຕືອນອັນຕະລາຍຍາມຄ່ຳມືດ ເພື່ອຮັບປະກັນການສັນຈອນມີຄວາມ ສະດວກ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ ແລະ ສິ່ງຜົນກະທົບຕໍ່ ສິ່ງແວດລ້ອມ ແລະ ສັງຄົມ ໃຫ້ໜ້ອຍທີ່ສຸດ.

## ພາກທີ III
## ທຸລະກິດກ່ຽວກັບການຈະລາຈອນທາງບົກ

**ມາດຕາ 53 (ປັບປຸງ) ປະເພດທຸລະກິດ**

ທຸລະກິດກ່ຽວກັບການຈະລາຈອນທາງບົກ ມີ ດັ່ງນີ້:

1. ໂຮງຮຽນສອນຂັບລົດ;
2. ການຜະລິດ, ຕິດຕັ້ງ ແລະ ສ້ອມແປງ ໄຟສັນຍານ, ປ້າຍ ແລະ ເຄື່ອງໝາຍ ຈະລາຈອນ;
3. ການບໍລິການບ່ອນຈອດລົດ;
4. ການບໍລິການລາກແກ່ລົດ;
5. ການບໍລິການທີ່ປຶກສາດ້ານວິສະວະກໍາຄວາມປອດໄພທາງຫຼວງ;
6. ທຸລະກິດອື່ນກ່ຽວກັບການຈະລາຈອນທາງບົກ.

**ມາດຕາ 54 (ປັບປຸງ) ການດໍາເນີນທຸລະກິດ**

ຜູ້ທີ່ມີຈຸດປະສົງດໍາເນີນທຸລະກິດ ກ່ຽວກັບການຈະລາຈອນທາງບົກ ຕ້ອງຂຶ້ນທະບຽນວິສາຫະກິດນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດດໍາເນີນທຸລະກິດນໍາຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 55 (ໃໝ່) ເງື່ອນໄຂການດໍາເນີນທຸລະກິດ**

ການດໍາເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີທຶນພຽງພໍ ໂດຍມີການຢັ້ງຢືນຖານະການເງິນ ຈາກທະນາຄານ ຫຼື ສະຖາບັນການເງິນ ທີ່ກ່ຽວຂ້ອງ;
3. ມີ ສໍານັກງານ ຫຼື ສິ່ງປຸກສ້າງ, ສະຖານທີ່, ວັດຖຸປະກອນ ແລະ ຍານພາຫະນະຮັບໃຊ້ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ ທີ່ເໝາະສົມກັບ ປະເພດ ແລະ ຂະໜາດ ຂອງທຸລະກິດ;
4. ມີນັກວິຊາການທີ່ມີ ປະສົບການ ແລະ ວິຊາສະເພາະ ທີ່ກ່ຽວຂ້ອງ ກັບທຸລະກິດຂອງຕົນ;
5. ມີຈັນຍາບັນວິຊາຊີບກ່ຽວກັບການຈະລາຈອນທາງບົກ.

**ມາດຕາ 56 (ໃໝ່) ເອກະສານປະກອບການຂໍອະນຸຍາດດໍາເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດໍາເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ ມີ ດັ່ງນີ້:

1. ຄໍາຮ້ອງຂໍອະນຸຍາດດໍາເນີນທຸລະກິດ ຕາມແບບພິມ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກໍານົດ;
2. ສໍາເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດໍາເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 57 (ໃໝ່) ການພິຈາລະນາອະນຸຍາດດໍາເນີນທຸລະກິດ**

ຂະແໜງການໂຍທາທິການ ແລະ ຂົນສົ່ງ ຕ້ອງພິຈາລະນາອອກໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບການຈະລາຈອນທາງບົກ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດ ອອກໃບອະນຸຍາດດໍາເນີນທຸລະກິດກ່ຽວກັບການຈະລາຈອນທາງບົກໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນກໍານົດເວລາດັ່ງກ່າວ.

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກມີອາຍຸການນຳໃຊ້ ໜຶ່ງປີ ແລະ ສາມາດຕໍ່ໄດ້. ໃບອະນຸຍາດດຳເນີນທຸລະກິດບໍ່ສາມາດ ມອບ, ໂອນ ຫຼື ໃຫ້ຜູ້ອື່ນນຳໃຊ້.

**ມາດຕາ 58 (ໃໝ່) ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນໃຫ້ຖືກຕ້ອງຕາມການອະນຸຍາດ;
2. ໄດ້ຮັບຂໍ້ມູນ ຂ່າວສານ ທີ່ຈຳເປັນໃນການດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ;
3. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;
4. ຮັບປະກັນດ້ານ ຄຸນນະພາບ, ມາດຕະຖານເຕັກນິກ ກ່ຽວກັບການດຳເນີນທຸລະກິດການຈະລາຈອນທາງບົກ ຂອງຕົນ;
5. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການບໍລິການຂອງຕົນ;
6. ໃຫ້ການຮ່ວມມືກັບ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ໃນການກວດກາການດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ;
7. ເສຍ ພາສີ, ອາກອນ ແລະ ພັນທະ ດ້ານການເງິນອື່ນຕາມກົດໝາຍ ແລະ ລະບຽບການ;
8. ນຳໃຊ້ ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 (ໃໝ່) ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ.

**ມາດຕາ 60 (ໃໝ່) ການຖອນໃບອະນຸຍາດ**

ການຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ ຈະຖືກຖອນ ໃນກໍລະນີ ດັ່ງນີ້:

1. ບໍ່ປັບປຸງແກ້ໄຂຕາມຄຳສັ່ງໂຈະ;
2. ມີການສະເໜີຂອງຜູ້ດຳເນີນທຸ ລະກິດ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
3. ນຳເອົາໃບອະນຸຍາດໃຫ້ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນນຳໃຊ້, ເຊົ່າ ຫຼື ໂອນ;
4. ລະເມີດກົດໝາຍ, ລະບຽບການຢ່າງຮ້າຍແຮງ ຕໍ່ເສດຖະກິດ ສັງຄົມ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນແລ້ວ ຂະແໜງການໂຍທາທິການ ແລະ ຂົນສົ່ງ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດເປັນຕົ້ນໄປ.

# ພາກທີ IV
# ສະມາຄົມ ແລະ ມູນນິທິ ການຈະລາຈອນທາງບົກ
## ໝວດທີ 1
## ສະມາຄົມ

**ມາດຕາ 61 (ປັບປຸງ) ທີ່ຕັ້ງຂອງສະມາຄົມ**

ສະມາຄົມການຈະລາຈອນທາງບົກ ແມ່ນ ການຈັດຕັ້ງສັງຄົມ ມີຖານະນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈຂອງຜູ້ດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ ແລະ ການເຄື່ອນໄຫວໂດຍບໍ່ຫວັງຜົນກຳໄລ ຊຶ່ງຂຶ້ນກັບການຄຸ້ມຄອງດ້ານວິຊາການ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມການຈະລາຈອນທາງບົກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 62 (ປັບປຸງ) ພາລະບົດບາດຂອງສະມາຄົມ**

ສະມາຄົມການຈະລາຈອນທາງບົກ ມີພາລະບົດບາດ ເຕົ້າໂຮມຄວາມສາມັກຄີ, ຜູ້ດຳເນີນທຸລະກິດ ແລະ ນັກວິຊາການ ກ່ຽວກັບການຈະລາຈອນທາງບົກ, ປະສານສົມທົບກັບອົງການຄຸ້ມຄອງວຽກງານຈະລາຈອນທາງບົກ, ໃຫ້ການຊ່ວຍເຫຼືອ ການ ປຶກສາ, ແນະນຳ, ແລກປ່ຽນບົດຮຽນ, ປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທຳ ຂອງສະມາຊິກຕົນ; ເຄື່ອນໄຫວຢູ່ພາຍໃຕ້ ກົດໝາຍ ແລະ ລະບຽບການ ປະກອບສ່ວນເຂົ້າໃນການພັດທະນາວຽກງານຈະລາຈອນທາງບົກ ໃຫ້ມີ ຄວາມ ປອດໄພ, ເປັນລະບຽບຮຽບຮ້ອຍ, ມີ ປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ.

**ມາດຕາ 63 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະມາຄົມ**

ສະມາຄົມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວຕາມແນວທາງນະໂຍບາຍ, ກົດໝາຍ ແລະ ກົດລະບຽບ ຂອງສະມາຄົມ;
2. ສ້າງ ກົດລະບຽບພາຍໃນ ແລະ ແຜນການດຳເນີນງານ ຂອງຕົນ;
3. ປະກອບຄຳເຫັນ ຕໍ່ ນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການກ່ຽວກັບວຽກງານຈະ ລາຈອນທາງບົກ;
4. ໂຄສະນາ ເຜີຍແຜ່ ກົດໝາຍ, ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ ແລະ ກົດລະ ບຽບພາຍໃນ, ແຜນດຳເນີນງານ ໃຫ້ແກ່ສະມາຊິກ ຂອງຕົນ;
5. ສົ່ງເສີມ, ແລກປ່ຽນບົດຮຽນ ແລະ ປະສົບການ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ຂອງສະມາຊິກຕົນ;
6. ຄຸ້ມຄອງ, ຕິດຕາມ, ປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງສະມາຊິກ ຕາມ ກົດໝາຍ ແລະ ລະບຽບການ;
7. ນຳໃຊ້ ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ກ່ຽວກັບວຽກງານຈະລາຈອນທາງບົກ;
8. ຂົນຂວາຍ ແຫຼ່ງທຶນຈາກ ພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານສະມາຄົມຈະລາຈອນທາງບົກ ໃຫ້ມີຄວາມ ເຂັ້ມແຂງ ແລະ ຍືນຍົງ;
9. ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນສະມາຄົມ ແລະ ບັນດານັກວິຊາການ ແລະ ພົວພັນຮ່ວມມືກັບສະມາຄົມອື່ນ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;
10. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
11. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ໝວດທີ 2
# ມູນນິທິການຈະລາຈອນທາງບົກ

**ມາດຕາ 64 (ປັບປຸງ) ມູນນິທິ**

ມູນນິທິການຈະລາຈອນທາງບົກ ແມ່ນການຈັດຕັ້ງສັງຄົມ ທີ່ມີຖານະ ເປັນນິຕິບຸກຄົນ, ມີທຶນ, ຊັບສິນສະເພາະ ເພື່ອສາທາລະນະປະໂຫຍດ ກ່ຽວກັບການຈະລາຈອນທາງບົກ ໂດຍບໍ່ຫວັງຜົນກຳໄລ, ສ້າງຕັ້ງ ແລະ ເຄື່ອນໄຫວ ພາຍໃຕ້ກົດໝາຍ, ລະບຽບການ ແລະ ກົດລະບຽບພາຍໃນຂອງຕົນ.

**ມາດຕາ 65 (ປັບປຸງ) ສິດ ແລະ ໜ້າທີ່ ຂອງມູນນິທິ**

ມູນນິທິ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຊ່ວຍເຫຼືອ ແລະ ກອບກູ້ ຜູ້ຖືກເຄາະຮ້າຍຈາກອຸບປະຕິເຫດທາງຫຼວງ;
2. ລະດົມ, ຂົນຂວາຍ ແລະ ຮັບການຊ່ວຍເຫຼືອທາງດ້ານເຕັກນິກ, ວິຊາການ, ທຶນ, ວັດຖຸປະກອນ ແລະ ພາຫະນະ ຈາກສັງຄົມ ທັງ ພາຍໃນ ແລະ ຕ່າງປະເທດ;
3. ໄດ້ຮັບການຝຶກອົບຮົມຈາກຂະແໜງການ ສາທາລະນະສຸກ, ອົງການກາແດງແຫ່ງຊາດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
4. ນຳໃຊ້ ຍານພາຫະນະ, ເຄື່ອງມື ແລະ ວັດຖຸປະກອນ ດ້ານວິຊາສະເພາະໃນການປະຕິບັດໜ້າທີ່ຂອງຕົນ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການປະຕິບັດໜ້າທີ່ວຽກງານ;
6. ແລກປ່ຽນບົດຮຽນ, ປະສົບການກັບມູນນິທິ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;
7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
8. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ V
## ກອງທຶນຄວາມປອດໄພການຈະລາຈອນທາງບົກ

**ມາດຕາ 66 (ໃໝ່) ກອງທຶນຄວາມປອດໄພການຈະລາຈອນທາງບົກ**

ກອງທຶນຄວາມປອດໄພການຈະລາຈອນທາງບົກ ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ສະສົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານຄວາມປອດໄພຕາມທາງຫຼວງ.

ກອງທຶນຄວາມປອດໄພການຈະລາຈອນທາງບົກ ຂຽນຫຍໍ້ວ່າ **"ກປຈ"**, ຂຽນເປັນພາສາອັງກິດ **(Road Traffic Safety Fund "RTSF").**

**ມາດຕາ 67 (ໃໝ່) ແຫຼ່ງກອງທຶນຄວາມປອດໄພການຈະລາຈອນທາງບົກ**

ກອງທຶນຄວາມປອດໄພການຈະລາຈອນທາງບົກ ໄດ້ມາຈາກແຫຼ່ງທຶນ ດັ່ງນີ້:

1. ງົບປະມານຂອງລັດ;
2. ເຈັດສິບສ່ວນຮ້ອຍ (70%) ຂອງຄ່າປະມູນເລກປ້າຍທະບຽນຍານພາຫະນະທາງບົກ;
3. ຄ່າປັບໃໝຈາກການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ ແລະ ການຂົນສົ່ງທາງບົກ; (ຄົ້ນຄວ້າຕື່ມຈັກສ່ວນຮ້ອຍ);
4. ສອງຈຸດຫ້າສ່ວນຮ້ອຍ (2.5%) ຂອງຄ່າການຂາຍປະກັນໄພຍານພາຫະນະທາງບົກ;
5. ສູນຈຸດຫ້າສ່ວນຮ້ອຍ (0.5%) ຂອງອາກອນລາຍໄດ້ຈາກການດຳເນີນທຸລະກິດກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ;
6. ດອກເບ້ຍ ຈາກບັນຊີເງິນຝາກຂອງ ກອງທຶນຄວາມປອດໄພການຈະລາຈອນທາງບົກ;
7. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
8. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 68 (ໃໝ່) ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນຄວາມປອດໄພການຈະລາຈອນທາງບົກ**

ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນຄວາມປອດໄພການຈະລາຈອນທາງບົກ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບ ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນຄວາມປອດໄພການຈະລາຈອນທາງບົກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 69 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ທຳລາຍ, ລັກ ປ້າຍ, ສັນຍານ ແລະ ເຄື່ອງໝາຍ ຈະລາຈອນ;
2. ສ້າງສິ່ງເປິະເປື້ອນ ແລະ ປິດບັງປ້າຍສັນຍານຈະລາຈອນ;
3. ຕິດປ້າຍທະບຽນລົດ ທີ່ບໍ່ຖືກຕ້ອງ, ດັດແປງປ້າຍທະບຽນລົດ ເປັນຕົ້ນ ໃສ່ຂອບປ້າຍ, ໃສ່ແກ້ວ ຫຼື ປຣາສຕິກໃສປົກປ້າຍທະບຽນ, ຕິດສະຕິກເກີ້ ຫຼື ຮູບພາບ ໃສ່ປ້າຍທະບຽນ;
4. ຕິດຕັ້ງ ປ້າຍຈະລາຈອນ, ປ້າຍໂຄສະນາ, ເຄື່ອງໝາຍຈະລາຈອນ, ສິ່ງກີດຂວາງ, ວາງເຄື່ອງຂາຍຈັດພິທີຕາມທາງຫຼວງ, ຢູ່ເທິງທາງຍ່າງ ແລະ ເຂດສະຫງວນຂອງທາງຫຼວງໂດຍບໍ່ໄດ້ຮັບອະນຸຍາດ;
5. ຫຼິ້ນກິລາ ຕາມທາງຫຼວງ, ທາງຄົນຍ່າງ;
6. ກໍ່ສ້າງ, ຕໍ່ເຕີມ ອາຄານ, ສິ່ງປຸກສ້າງເລື່ອມເອົາເຂດສະຫງວນຂອງທາງຫຼວງ ທີ່ກີດຂວາງການຈະລາຈອນ;

7. ດຳເນີນກິດຈະການຕ່າງໆ ຢູ່ບ່ອນທາງໂຄ້ງ, ທາງແຄບ ຫຼື ແຄມທາງທີ່ບໍ່ມີບ່ອນຈອດລົດທີ່ເປັນອັນຕະລາຍ ແລະ ສ່ຽງຕໍ່ການເກີດອຸບປະຕິເຫດ;

8. ຂຸດດິນ, ຖົມດິນ, ກອງດິນ, ກອງວັດສະດຸ ແລະ ຕາກຜົນລະປູກ ໃສ່ທາງຫຼວງ;

9. ຖິ້ມຂີ້ເຫຍື້ອ, ຖອກ ຫຼື ປ່ອຍ ນ້ຳເປື້ອນ, ນ້ຳມັນ, ລ້າງລົດໃສ່ ທາງ ແລະ ແຄມທາງ;

10. ຈອດລົດຢູ່ເທິງທາງຍ່າງ, ທາງຄົບ, ທາງແຍກ, ທາງໂຄ້ງ, ທາງທີ່ຫຼີກກັນບໍ່ໄດ້, ທາງໃນອຸໂມງ, ທາງເຂົ້າ-ອອກຂົວ ແລະ ໃນຂົວ;

11. ປະປ່ອຍເດັກນ້ອຍຂ້າມທາງຫຼວງ ແລະ ຫຼິ້ນຢູ່ແຄມທາງຫຼວງໂດຍລຳພັງ;

12. ລ້ຽງ, ປ່ອຍສັດລ້ຽງ ຕາມທາງຫຼວງ, ເຄື່ອນຍ້າຍສັດລ້ຽງຕາມທາງຫຼວງໂດຍບໍ່ມີຜູ້ຄວບຄຸມ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 70 (ປັບປຸງ) ຂໍ້ຫ້າມສຳລັບຜູ້ນຳໃຊ້ທາງຫຼວງ**

ຫ້າມຜູ້ນຳໃຊ້ທາງຫຼວງ ມີ ພຶດຕິກຳ ດັ່ງນີ້:

1. ຂັບຂີ່ລົດໃນເວລາທີ່ມີປະລິມານທາດເຫຼົ້າເກີນກຳນົດ ຫຼື ສານເສບຕິດ ໃນຮ່າງກາຍ;

2. ຂັບຂີ່ລົດ ໄວເກີນກຳນົດ, ເຈີດຊ້າຍເຈີດຂວາ, ຊີງຂຶ້ນໜ້າລົດຄັນອື່ນດ້ວຍຄວາມປະໝາດ ແລະ ບໍ່ຖືກຕ້ອງຕາມລະບຽບການກ່ຽວກັບກົດຈະລາຈອນທາງບົກ;

3. ໃຊ້ໂທລະສັບມືຖື, ເຄື່ອງຫຼິ້ນເອເລັກໂຕຣນິກຕ່າງໆໃນເວລາ ຂັບຂີ່ລົດ ແລະ ຍ່າງຂ້າມທາງຫຼວງ;

4. ຍ່າງຮຽງກັນເປັນ ໜ້າກະດານ, ກຸ່ມກ້ອນ ທີ່ກີດຂວາງການຈະລາຈອນ;

5. ຂັບຂີ່ລົດຈັກ, ລົດຖີບທຸກປະເພດ ຮຽງກັນ ທີ່ກີດຂວາງການຈະລາຈອນ;

6. ຂັບຂີ່ລົດທຸກປະເພດບໍ່ຖືກຕ້ອງຕາມຊ່ອງຈະລາຈອນ, ກວມເສັ້ນແບ່ງ ຊ່ອງ ແລະ ທິດທາງການຈະລາຈອນ;

7. ຂັບຂີ່ລົດສວນທິດທາງການຈະລາຈອນ;

8. ຂັບຂີ່ລົດຕີນເຫຼັກຂຶ້ນຢຽບທາງຫຼວງ;

9. ຈອດລົດປະເພດສາມລໍ້ ແລະ ສີ່ລໍ້ຂຶ້ນໄປຮຽງກັນຕາມທາງຫຼວງ ທີ່ກີດຂວາງການຈະລາຈອນ;

10. ກັ້ງຄັນຮົ່ມໃນເວລາຂັບຂີ່ລົດຈັກ, ລົດຖີບ;

11. ບັນທຸກຜູ້ໂດຍສານເກີນຈຳນວນ, ສິນຄ້າເກີນນ້ຳໜັກ ຫຼື ຂະໜາດທີ່ກຳນົດ;

12. ບັນທຸກ ສິນຄ້າ, ວັດຖຸ ອັນຕະລາຍໂດຍບໍ່ໄດ້ຮັບອະນຸຍາດ;

13. ສ້ອມແປງລົດຢູ່ ກາງທາງ, ໃນຂົວ ແລະ ອຸໂມງ;

14. ເປີດເຄື່ອງສຽງດັງເກີນກຳນົດໃນເວລາຂັບຂີ່;

15. ແຂ່ງລົດທຸກຊະນິດຕາມທາງຫຼວງໂດຍບໍ່ໄດ້ຮັບອະນຸຍາດ;

16. ປະທ່ອນໄມ້, ຝັດໄມ້, ກ້ອນຫີນ ຫຼື ສິ່ງກີດຂວາງອື່ນ ທີ່ໜູນຕີນລົດໄວ້ຕາມທາງຫຼວງ;

17. ໃຊ້ວາຈາ, ທ່າທີ ທີ່ບໍ່ສຸພາບ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ເຈົ້າໜ້າທີ່ ທີ່ປະຕິບັດໜ້າທີ່ຄວບຄຸມການຈະລາຈອນທາງບົກ;

18. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 71 (ປັບປຸງ) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດການຈະລາຈອນທາງບົກ**

ຫ້າມຜູ້ດຳເນີນທຸລະກິດການຈະລາຈອນທາງບົກ ມີພຶດຕິກຳ ດັ່ງນີ້:

1. ໃຫ້ເຊົ່າ ຫຼື ໂອນໃບອະນຸຍາດດຳເນີນທຸລະກິດ;

2. ຂາຍ, ມອບ, ໂອນ ໂຄງການກ່ຽວກັບການຈະລາຈອນທາງບົກ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;

3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມການອະນຸຍາດ;

4. ປົດບັງ, ປອມແປງ, ບິດເບືອນ ແລະ ທຳລາຍ ຂໍ້ມູນກ່ຽວກັບການດຳເນີນທຸລະກິດຂອງຕົນ;

5. ສົມຮູ້ຮ່ວມຄິດ, ຊື້ຈ້າງ, ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ ເຈົ້າໜ້າທີ່ ແລະ ພະນັກ ງານ-ລັດຖະກອນ ທີ່ກ່ຽວຂ້ອງ;

6. ໂຄສະນາ, ຕົວະຍົວະຫຼອກລວງ ຫຼື ສະໜອງຂໍ້ມູນ ບໍ່ຖືກຕ້ອງຕາມຄວາມເປັນຈິງ;

7. ບໍ່ໃຫ້ຄວາມຮ່ວມມື, ໝິ່ນປະໝາດ, ນາບຂູ່, ທຳຮ້າຍຮ່າງກາຍເຈົ້າໜ້າທີ່ ແລະ ພະນັກງານ-ລັດ ຖະກອນທີ່ກ່ຽວຂ້ອງ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 72 (ປັບປຸງ) ຂໍ້ຫ້າມສຳລັບເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດອຳນາດ, ໜ້າທີ່, ຕຳແໜ່ງ ຂອງຕົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

3. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານ ໃຫ້ວິສາຫະກິດກ່ຽວກັບການຈະລາຈອນທາງບົກ;

4. ເປີດເຜີຍຂໍ້ມູນກ່ຽວກັບການປະມູນ ໂຄງການ ຜະລິດ, ຕິດຕັ້ງ ແລະ ສ້ອມແປງ ໄຟສັນຍານ, ປ້າຍ ແລະ ເຄື່ອງໝາຍ ຈະລາຈອນ;

5. ສົມຮູ້ຮ່ວມຄິດ, ຂໍເອົາ, ທວງເອົາ, ຮັບສິນບົນ;

6. ປອມແປງ, ກົດໜ່ວງຖ່ວງດຶງ ເອກະສານ ກ່ຽວກັບ ການປະມູນ, ການຂໍອະນຸຍາດດຳເນີນທຸລະກິດ, ການອອກໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ;

7. ເມີນເສີຍຕໍ່ ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ, ການກະທຳຂອງຜູ້ດຳເນີນທຸລະກິດທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

8. ໃຊ້ວາຈາ, ທ່າທີ ທີ່ບໍ່ສຸພາບ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ຜູ້ນຳໃຊ້ທາງຫຼວງ ແລະ ຜູ້ຂັບຂີ່ລົດ;

9. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

# ພາກທີ VII
# ຄະນະກຳມະການດ້ານຄວາມປອດໄພທາງຫຼວງ

**ມາດຕາ 73 (ປັບປຸງ) ຄະນະກຳມະການດ້ານຄວາມປອດໄພທາງຫຼວງ**

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ເປັນການຈັດຕັ້ງທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນການ ຄົ້ນຄວ້າ, ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານງານ ກັບ ພາກສ່ວນທີ່ກ່ຽວຂ້ອງ ພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ການ ສົ່ງເສີມ ແລະ ຄຸ້ມຄອງ ວຽກງານຈະລາຈອນທາງບົກ ມີຄວາມ ສະດວກ, ວ່ອງໄວ, ປອດໄພ, ເຊື່ອມໂຍງ ແລະ ເຊື່ອມຈອດ ເຂົ້າກັບລະບົບການຈະລາຈອນທາງບົກ ຂອງອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ປະກອບດ້ວຍ:

1. ຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ;
2. ຄະນະກຳມະການດ້ານຄວາມປອດໄພທາງຫຼວງຂັ້ນແຂວງ;
3. ຄະນະກຳມະການດ້ານຄວາມປອດໄພທາງຫຼວງຂັ້ນເມືອງ.

**ມາດຕາ 74 (ປັບປຸງ) ໂຄງປະກອບຂອງຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ**

ຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ ປະກອບດ້ວຍ:

1. ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
5. ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນກຳມະການ;
6. ຮອງລັດຖະມົນຕີ ກະຊວງການເງິນ ເປັນກຳມະການ;
7. ຮອງປະທານອົງການກາແດງແຫ່ງຊາດລາວ ເປັນກຳມະການ;
8. ຮອງປະທານສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
9. ຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ;
10. ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;
11. ຫົວໜ້າກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

ຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ມີກອງເລຂາ ຕັ້ງຢູ່ ກະຊວງໂຍທາທິການ ແລະ ຂົນສົ່ງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ.

**ມາດຕາ 75 (ປັບປຸງ) ໂຄງປະກອບຂອງຄະນະກຳມະການດ້ານຄວາມປອດໄພທາງຫຼວງຂັ້ນແຂວງ**

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ຂັ້ນແຂວງ ປະກອບດ້ວຍ:

1. ຮອງປະທານຄະນະກຳມະການປົກຄອງ ຂັ້ນແຂວງ ເປັນປະທານ;
2. ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ເປັນຮອງປະທານ ທັງເປັນຜູ້ຈຳການ;
3. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ເປັນຮອງປະທານ;
4. ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ເປັນກຳມະການ;
5. ຮອງຫົວໜ້າພະແນກສາທາລະນະສຸກ ຂັ້ນແຂວງ ເປັນກຳມະການ;
6. ຮອງຫົວໜ້າພະແນກການເງິນ ຂັ້ນແຂວງ ເປັນກຳມະການ;
7. ຫົວໜ້າຫ້ອງການອົງການກາແດງ ຂັ້ນແຂວງ ເປັນກຳມະການ;

8. ຮອງປະທານສະຫະພັນກຳມະບານ ຂັ້ນແຂວງ ເປັນກຳມະການ;

9. ຮອງປະທານສະຫະພັນແມ່ຍິງ ຂັ້ນແຂວງ ເປັນກຳມະການ;

10. ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ຂັ້ນແຂວງ ເປັນກຳມະການ;

11. ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ຂັ້ນແຂວງ ຖືກແຕ່ງຕັ້ງໂດຍປະທານຄະນະກຳມະ ການປົກຄອງ ຂັ້ນແຂວງ ຕາມການສະເໜີຂອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ແລະ ມີກອງເລຂາຕັ້ງຢູ່ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການດ້ານຄວາມປອດໄພທາງຫຼວງ ຂັ້ນແຂວງ.

**ມາດຕາ 76 (ປັບປຸງ) ໂຄງປະກອບຂອງຄະນະກຳມະການດ້ານຄວາມປອດໄພທາງຫຼວງ ຂັ້ນເມືອງ**

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ຂັ້ນເມືອງ ປະກອບດ້ວຍ:

1. ຮອງປະທານຄະນະກຳມະການປົກຄອງ ຂັ້ນເມືອງ ເປັນປະທານ;
2. ຫົວໜ້າຫ້ອງການ ໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ເປັນຮອງປະທານ ທັງເປັນຜູ້ຈຳການ;
3. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ເປັນຮອງປະທານ;
4. ຮອງຫົວໜ້າຫ້ອງການ ສຶກສາທິການ ແລະ ກິລາ ຂັ້ນເມືອງ ເປັນກຳມະການ;
5. ຮອງຫົວໜ້າຫ້ອງການ ສາທາລະນະສຸກ ຂັ້ນເມືອງ ເປັນກຳມະການ;
6. ຮອງຫົວໜ້າຫ້ອງການ ການເງິນ ຂັ້ນເມືອງ ເປັນກຳມະການ;
7. ຮອງຫົວໜ້າ ຫ້ອງການກາແດງ ຂັ້ນເມືອງ ເປັນກຳມະການ;
8. ຮອງປະທານສະຫະພັນກຳມະບານ ຂັ້ນເມືອງ ເປັນກຳມະການ;
9. ຮອງປະທານສະຫະພັນແມ່ຍິງ ຂັ້ນເມືອງ ເປັນກຳມະການ;
10. ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ຂັ້ນເມືອງ ເປັນກຳມະການ;
11. ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ຂັ້ນເມືອງ ຖືກແຕ່ງຕັ້ງໂດຍປະທານຄະນະກຳມະການປົກຄອງ ຂັ້ນເມືອງ ຕາມການສະເໜີຂອງຫົວໜ້າຫ້ອງການ ໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ແລະ ມີກອງເລຂາຕັ້ງຢູ່ ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການດ້ານຄວາມປອດໄພທາງຫຼວງ ຂັ້ນເມືອງ.

**ມາດຕາ 77 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການດ້ານຄວາມປອດໄພທາງຫຼວງ**

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານດ້ານຄວາມປອດໄພທາງຫຼວງ;
2. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານດ້ານຄວາມປອດໄພທາງຫຼວງ;
3. ແນະນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບ ກັບບັນດາ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພທາງຫຼວງ;
4. ລະດົມ, ຄຸ້ມຄອງ ແລະ ນຳໃຊ້ທຶນ ທີ່ໄດ້ຮັບການສະໜັບສະໜູນຈາກ ພາຍໃນ ແລະ ຕ່າງປະເທດເຂົ້າໃນວຽກງານຄວາມປອດໄພທາງຫຼວງໃຫ້ມີປະສິດທິຜົນ;
5. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ຕໍ່ຂັ້ນເທິງຂອງຕົນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາ ວຽກງານຈະລາຈອນທາງບົກ
## ໝວດທີ 1
## ການຄຸ້ມຄອງວຽກງານຈະລາຈອນທາງບົກ

**ມາດຕາ 78 (ປັບປຸງ) ອົງການຄຸ້ມຄອງວຽກງານຈະລາຈອນທາງບົກ**

ລັດຖະບານ ຄຸ້ມຄອງວຽກງານຈະລາຈອນທາງບົກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຈະລາຈອນທາງບົກ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງປ້ອງກັນຄວາມສະຫງົບ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ;
4. ຄະນະກຳມະການປົກຄອງຕາແສງ.

**ມາດຕາ 79 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຊີ້ນຳ, ຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
3. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ເຈົ້າໜ້າທີ່ກວດກາການຂົນສົ່ງທາງບົກ;
4. ຄົ້ນຄວ້າ ສ້າງ ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ, ເລືອກເຟັ້ນ ເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ ແລະ ເໝາະສົມ ເຂົ້າໃນວຽກງານຈະລາຈອນທາງບົກ;
5. ຄົ້ນຄວ້າ ສ້າງ ມາດຕະຖານເຕັກນິກ ຂອງໂຮງຮຽນສອນຂັບລົດ ແລະ ໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ;
6. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຈະລາ ຈອນທາງບົກ;
7. ລະດົມ, ຄົ້ນຄວ້າ ຊອກແຫຼ່ງທຶນ ພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານຈະລາຈອນທາງບົກ;
8. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ການຈະລາຈອນທາງບົກ;
9. ຄົ້ນຄວ້າ, ວິໄຈຂໍ້ມູນ, ສະຖິຕິອຸບປະຕິເຫດ ແລະ ສັງລວມປະລິມານການສັນຈອນຕາມທາງຫຼວງ;
10. ສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນ ດ້ານການຈະລາຈອນທາງບົກ;
11. ສ້າງ ແລະ ພັດທະນາ ສູນຄວບຄຸມການຈະລາຈອນທາງບົກ;
12. ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ບັນດາກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ;
13. ພົວພັນ, ຮ່ວມມືກັບ ຕ່າງປະເທດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຈະລາຈອນທາງບົກ;

14. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 80 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະກອບຄຳເຫັນໃສ່ຮ່າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະ ບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ ແລ້ວສົ່ງຄືນໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ ມາເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ ແນໃສ່ປູກຈິດສຳນຶກໃຫ້ແກ່ປະຊາຊົນ ປະກອບສ່ວນເຂົ້າໃນວຽກງານຈະລາຈອນທາງບົກ;

4. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຈະລາຈອນທາງບົກ;

5. ປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ;

6. ຄຸ້ມຄອງ ແລະ ນຳໃຊ້ ສູນຄວບຄຸມການຈະລາຈອນທາງບົກ ເພື່ອ ຕິດຕາມສະພາບ ແລະ ຊີ້ນຳການຈະລາຈອນຕາມທາງຫຼວງ;

7. ຊີ້ນຳ, ຕິດຕາມ ກວດກາ, ອຳນວຍຄວາມສະດວກ ແລະ ຄວບຄຸມການຈະລາຈອນ ຕາມທາງຫຼວງ;

8. ເກັບກຳຂໍ້ມູນອຸບປະຕິເຫດເຂົ້າໃນຖານຂໍ້ມູນອຸບປະຕິເຫດດ້ວຍລະບົບທີ່ທັນສະໄໝ ເພື່ອນຳໃຊ້ເຂົ້າໃນການ ສຶກສາ, ຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ຊອກຮູ້ ສາເຫດແລ້ວ ກຳນົດ ວິທີການ ແລະ ມາດຕະການ ໃນການແກ້ໄຂ;

9. ອຳນວຍຄວາມສະດວກ, ຄວບຄຸມ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ຂອງການຈະລາຈອນທາງບົກ ແລະ ສັງລວມປະລິມານການສັນຈອນຕາມທາງຫຼວງ ເພື່ອວາງແຜນປ້ອງກັນ ແລະ ສະກັດກັ້ນ ອຸບປະຕິເຫດທາງຫຼວງ;

10. ຄົ້ນຄວ້າ ແກ້ໄຂອຸບປະຕິເຫດ ຕາມທາງຫຼວງ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ

11. ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ ໃນຂອບເຂດທົ່ວປະເທດ;

12. ຄຸ້ມຄອງ ແລະ ນຳໃຊ້ ສູນຄວບຄຸມການຈະລາຈອນທາງບົກ ເພື່ອ ຕິດຕາມສະພາບ ແລະ ຊີ້ນຳການຈະລາຈອນຕາມທາງຫຼວງ;

13. ຄຸ້ມຄອງ, ນຳພາ, ຊີ້ນຳ, ຕິດຕາມ ກວດກາ ແລະ ຊຸກຍູ້ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ຕຳຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ ຢ່າງເຂັ້ມງວດ;

14. ສ້າງ, ບຳລຸງ ແລະ ຍົກລະດັບ ດ້ານ ຄວາມຮູ້, ຄວາມສາມາດ ໃຫ້ເຈົ້າໜ້າທີ່ ຕຳຫຼວດຈະລາຈອນ, ຕຳຫຼວດທາງຫຼວງ ທັງສູນກາງ ແລະ ທ້ອງຖິ່ນ ພ້ອມທັງປະກອບວັດຖຸປະກອນ ແລະ ຍານພາຫະນະ ທີ່ຈຳເປັນໃນການປະຕິບັດໜ້າທີ່;

15. ອອກ ລະບຽບການ ແລະ ຄູ່ມື ກ່ຽວກັບວຽກງານຈະລາຈອນທາງບົກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

16. ພົວພັນ, ຮ່ວມມືກັບ ຕ່າງປະເທດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຈະລາຈອນທາງບົກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

17.ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 81 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ;

2. ປະສານສົມທົບກັບກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກອື່ນຂັ້ນແຂວງ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່, ປູກຈິດສຳນຶກໃຫ້ແກ່ປະຊາຊົນກ່ຽວກັບວຽກງານຈະລາຈອນທາງບົກ;

3. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ເຈົ້າໜ້າທີ່ກວດກາການຂົນສົ່ງທາງບົກ;

4. ຄົ້ນຄວ້າ, ວິໄຈ ຂໍ້ມູນ, ສະຖິຕິອຸບປະຕິເຫດ ແລະ ສັງລວມ ຈຳນວນຍານພາຫະນະ ແລະ ປະລິມານການສັນຈອນຕາມທາງຫຼວງ;

5. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຈະລາ ຈອນທາງບົກ;

6. ຄຸ້ມຄອງ ຄວາມປອດໄພໃນການຈະລາຈອນທາງບົກ ແລະ ການຂັບຂີ່, ໂຮງຮຽນສອນຂັບຂີ່, ສູນຝຶກການຂັບຂີ່, ການສອບເສັງໃບຂັບຂີ່ ແລະ ກິດຈະການອື່ນກ່ຽວກັບການຈະລາຈອນທາງບົກ;

7. ລະດົມ, ຄົ້ນຄວ້າ ຊອກແຫຼ່ງທຶນ ພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານຈະລາຈອນທາງບົກ;

8. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ການຈະລາຈອນທາງບົກ;

9. ຄຸ້ມຄອງ, ຕິດຕັ້ງ, ບູລະນະຮັກສາ ແລະ ສ້ອມແປງ ປ້າຍ, ສັນຍານ ແລະ ເຄື່ອງໝາຍ ຈະລາຈອນທາງບົກ ຕາມທາງຫຼວງ;

10. ຈັດຕັ້ງການ ຝຶກອົບຮົມ, ສອບເສັງ ແລະ ອອກໃບອະນຸຍາດຂັບຂີ່ຍານພາຫະນະທາງບົກ;

11. ພົວພັນ, ຮ່ວມມືກັບ ຕ່າງປະເທດ ກ່ຽວກັບວຽກງານຈະລາຈອນທາງບົກ ຕາມການມອບໝາຍ;

12. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ຕໍ່ກະຊວງໂຍທາທິການ ແລະ ຂົນສົ່ງ, ຄະນະກຳມະການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 82 (ປັບປຸງ) ສິດ ແລະ ໜ້າທີ່ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ;

2. ປະກອບຄຳເຫັນໃສ່ຮ່າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ກ່ຽວກັບວຽກງານຈະລາຈອນທາງບົກ ແລ້ວສົ່ງຄືນໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ;

3. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຈະລາ ຈອນທາງບົກ;

4. ປະສານສົມທົບກັບ ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກການອື່ນຂັ້ນແຂວງ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປູກຈິດສຳນຶກໃຫ້ແກ່ປະຊາຊົນກ່ຽວກັບວຽກງານຈະລາຈອນທາງບົກ;

5. ຕິດຕາມ ການເຄົາລົບ ແລະ ການປະຕິບັດ ກົດໝາຍ ແລະ ລະບຽບການ ຂອງ ຜູ້ຂັບຂີ່ຍານພາຫະນະ ແລະ ພາຫະນະ ທຸກຊະນິດ ຕາມທາງຫຼວງ ຢ່າງເຂັ້ມງວດ ເພື່ອປ້ອງກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງການຈະລາຈອນ;

6. ເກັບກຳຂໍ້ມູນອຸບປະຕິເຫດເຂົ້າໃນຖານຂໍ້ມູນອຸປະຕິເຫດດ້ວຍລະບົບທີ່ທັນສະໄໝ ເພື່ອນຳໃຊ້ເຂົ້າໃນການ ສຶກສາ, ຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ຊອກຮູ້ ສາເຫດແລ້ວ ກຳນົດ ວິທີການ ແລະ ມາດຕະການ ໃນການແກ້ໄຂ;

7. ຄຸ້ມຄອງ, ຊີ້ນຳ, ຕິດຕາມ ກວດກາ ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງກ່ຽວກັບວຽກງານຈະລາຈອນທາງບົກ;

8. ອຳນວຍຄວາມສະດວກ, ຄວບຄຸມ ແລະ ຈັດສັນ ຄວາມເປັນລະບຽບຮຽບຮ້ອຍ ຂອງການຈະລາຈອນທາງບົກ ແລະ ສັງລວມປະລິມານການສັນຈອນຕາມທາງຫຼວງ ເພື່ອວາງແຜນປ້ອງກັນ ແລະ ສະກັດກັ້ນ ອຸບປະຕິເຫດທາງຫຼວງ;

9. ຄົ້ນຄວ້າ ແກ້ໄຂອຸບປະຕິເຫດຕາມທາງຫຼວງ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

10. ຄຸ້ມຄອງ ແລະ ນຳໃຊ້ ສູນຄວບຄຸມການຈະລາຈອນທາງບົກ ເພື່ອ ຕິດຕາມສະພາບ ແລະ ຊີ້ນຳການຈະລາຈອນຕາມທາງຫຼວງ;

11. ສ້າງ, ບຳລຸງ ແລະ ຍົກລະດັບ ດ້ານ ຄວາມຮູ້, ຄວາມສາມາດ ໃຫ້ເຈົ້າໜ້າທີ່ ຕຳຫຼວດຈະລາຈອນ, ຕຳຫຼວດທາງຫຼວງ ພ້ອມທັງປະກອບວັດຖຸປະກອນ ແລະ ຍານພາຫະນະ ທີ່ຈຳເປັນໃນການປະຕິບັດໜ້າທີ່;

12. ຄຸ້ມຄອງ, ນຳພາ, ຊີ້ນຳ, ຕິດຕາມ ກວດກາ ແລະ ຊຸກຍູ້ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ຕຳ ຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ ຢ່າງເຂັ້ມງວດ;

13. ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງວຽກງານຈະລາຈອນທາງບົກ;

14. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ຕໍ່ກະຊວງປ້ອງກັນຄວາມສະຫງົບ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 83 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານຈະລາຈອນທາງບົກຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ;

2. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຈະລາ ຈອນທາງບົກ;

3. ປະສານສົມທົບກັບກອງບັນຊາການປ້ອງກັນຄວາມສະຫງົບ, ຫ້ອງການອື່ນ ຂັ້ນເມືອງ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່, ປູກຈິດສຳນຶກໃຫ້ແກ່ປະຊາຊົນກ່ຽວກັບວຽກງານຈະລາຈອນທາງບົກ;

4. ຈັດຕັ້ງ, ຄຸ້ມຄອງ ການສອບເສັງໃບຂັບຂີ່ປະເພດ ລົດຈັກສອງລໍ້, ລົດໄຖນາ, ລົດຕ່ອກໆ;

5. ຄຸ້ມຄອງ, ຕິດຕັ້ງ, ບູລະນະຮັກສາ ແລະ ສ້ອມແປງ ປ້າຍ ແລະ ເຄື່ອງໝາຍ ຈະລາຈອນທາງບົກ ຕາມທາງຫຼວງ;

6. ເຂົ້າຮ່ວມໃນການແກ້ໄຂອຸບປະຕິເຫດທີ່ເກີດຂຶ້ນໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

7. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ຕໍ່ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 84 (ປັບປຸງ) ສິດ ແລະ ໜ້າທີ່ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ;

2. ອອກ, ໂຈະ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຈະລາ ຈອນ ທາງບົກ;

3. ປະສານສົມທົບກັບ ຫ້ອງການໂຍທາທິການ ແລະ ຂົນສົ່ງ, ຫ້ອງການອື່ນຂັ້ນເມືອງ ໃນການສຶກສາ ອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປູກຈິດສຳນຶກໃຫ້ແກ່ປະຊາຊົນກ່ຽວກັບວຽກງານຈະລາຈອນທາງບົກ;

4. ປະກອບຄຳເຫັນໃສ່ຮ່າງ ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານຈະລາຈອນທາງບົກ ແລ້ວສົ່ງຄືນໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ;

5. ປະສານສົມທົບກັບຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ໃນການປົກປັກຮັກສາ ປ້າຍ, ສັນຍານ ແລະ ເຄື່ອງໝາຍ ຈະລາຈອນ ຕາມທາງຫຼວງ;

6. ເກັບກຳຂໍ້ມູນອຸບປະຕິເຫດເຂົ້າໃນຖານຂໍ້ມູນອຸບປະຕິເຫດດ້ວຍລະບົບທີ່ທັນສະໄໝ ເພື່ອສັງລວມ ແລະ ລາຍງານຕໍ່ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ;

7. ອຳນວຍຄວາມສະດວກ, ຄວບຄຸມ ແລະ ຈັດສັນ ຄວາມເປັນລະບຽບຮຽບຮ້ອຍ ຂອງການ ຈະລາຈອນທາງບົກ ແລະ ສັງລວມປະລິມານການສັນຈອນຕາມທາງຫຼວງ ເພື່ອວາງແຜນປ້ອງກັນ ແລະ ສະກັດກັ້ນ ອຸບປະຕິເຫດທາງຫຼວງ;

8. ຄຸ້ມຄອງ, ນຳພາ, ຊີ້ນຳ, ຕິດຕາມ ກວດກາ ແລະ ຊຸກຍູ້ ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ຕຳ ຫຼວດ ຈະລາຈອນ ແລະ ຕຳຫຼວດທາງຫຼວງ ຢ່າງເຂັ້ມງວດ;

9. ຕິດຕາມ ການເຄົາລົບ ແລະ ການປະຕິບັດ ກົດໝາຍ ແລະ ລະບຽບການ ຂອງ ຜູ້ຂັບຂີ່ຍານພາຫະນະ ແລະ ພາຫະນະ ທຸກຊະນິດ ຕາມທາງຫຼວງ ຢ່າງເຂັ້ມງວດ ເພື່ອປ້ອງກັນຄວາມປອດໄພ ແລະ ຄວາມເປັນ ລະບຽບຮຽບຮ້ອຍຂອງການຈະລາຈອນ;

10. ຄົ້ນຄວ້າແກ້ໄຂອຸບປະຕິເຫດຕາມທາງຫຼວງໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

11. ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງວຽກງານຈະລາຈອນທາງບົກ;

12. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ຕໍ່ກອງບັນຊາການ ປ້ອງກັນຄວາມສະຫງົບຂັ້ນແຂວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 85 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງຕາແສງ**

ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ຄະນະກຳມະການປົກຄອງຕາແສງມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ກ່ຽວກັບວຽກງານຈະລາຈອນທາງບົກໃຫ້ແກ່ປະຊາຊົນ;

2. ປຸກລະດົມປະຊາຊົນໃນການປະກອບສ່ວນປົກປັກຮັກສາ ປ້າຍ, ສັນຍານ ແລະ ເຄື່ອງໝາຍ ຈະລາ ຈອນ ຕາມທາງຫຼວງ ພ້ອມທັງລາຍງານການເປ່ເພເສຍຫາຍຂອງ ປ້າຍ, ສັນຍານ ແລະ ເຄື່ອງໝາຍ ຈະລາຈອນ ຕາມທາງຫຼວງ ຕໍ່ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ຢ່າງທັນການ;

3. ເຂົ້າຮ່ວມ, ຊ່ວຍຄວບຄຸມສະຖານທີ່ເກີດອຸບປະຕິເຫດຕາມທາງຫຼວງ ພ້ອມທັງລາຍງານຕໍ່ຕຳຫຼວດ ຈະລາຈອນ ແລະ ຕຳຫຼວດທາງຫຼວງ ຢ່າງທັນການ;

4. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການຄວບຄຸມການຈະລາຈອນທາງບົກ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 86 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບອົງການຄຸ້ມຄອງວຽກງານການຈະລາຈອນທາງບົກໃນການຄຸ້ມຄອງວຽກງານຈະລາຈອນທາງບົກຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຈະລາຈອນທາງບົກ

**ມາດຕາ 87 (ປັບປຸງ) ອົງການກວດກາ**

ອົງການກວດກາວຽກງານຈະລາຈອນທາງບົກ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຈະລາຈອນທາງບົກຕາມທີ່ໄດ້ກຳນົດໄວ້ໃນມາດຕາ 78 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດ ກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

**ມາດຕາ 88 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານຈະລາຈອນທາງບົກ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບການ ກ່ຽວກັບວຽກງານຈະລາຈອນທາງບົກ;
2. ການດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ;
3. ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;
4. ເນື້ອໃນອື່ນທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 89 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານຈະລາຈອນທາງບົກ ມີ ສາມຮູບການ ດັ່ງນີ້:

1. ການກວດກາເປັນປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມ ຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານຈະລາຈອນທາງບົກນັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ IX
## ສັບປະດາແຫ່ງຊາດດ້ານຄວາມປອດໄພທາງຫຼວງ, ເຄື່ອງແບບ ແລະ ເຄື່ອງໝາຍ

**ມາດຕາ 90 (ປັບປຸງ) ສັບປະດາແຫ່ງຊາດດ້ານຄວາມປອດໄພທາງຫຼວງ**

ລັດກຳນົດເອົາສັບປະດາທີໜຶ່ງຂອງເດືອນເມສາຂອງທຸກໆປີ ເປັນສັບປະດາແຫ່ງຊາດດ້ານຄວາມປອດໄພທາງຫຼວງ.

ໃນທຸກປີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ບັນດາກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈັດງານສັບປະດາແຫ່ງຊາດດ້ານຄວາມປອດໄພທາງຫຼວງ ໃນການປຸກລະດົມ ຜູ້ນຳໃຊ້ລົດ, ນຳໃຊ້ທາງຫຼວງ ແລະ ທຸກພາກສ່ວນໃນສັງຄົມ ເຫັນໄດ້ຄວາມສຳຄັນ ແລະ ຈຳເປັນ ພ້ອມທັງປະກອບສ່ວນເຂົ້າໃນວຽກງານຈະລາຈອນທາງບົກ ເພື່ອປ້ອງກັນ ແລະ ຫຼຸດຜ່ອນອຸບປະຕິເຫດຕາມທາງຫຼວງ.

**ມາດຕາ 91 (ປັບປຸງ) ເຄື່ອງແບບ, ກາໝາຍ ແລະ ເຄື່ອງໝາຍ**

ເຈົ້າໜ້າທີ່ ຕຳຫຼວດຈະລາຈອນ, ຕຳຫຼວດທາງຫຼວງ ມີເຄື່ອງແບບ, ກາໝາຍ ແລະ ເຄື່ອງໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ທາງລັດຖະການ ໂດຍການກຳນົດ ຂອງ ກະຊວງປ້ອງກັນຄວາມສະຫງົບ.

ເຈົ້າໜ້າທີ່ກວດກາການຂົນສົ່ງທາງບົກ ມີເຄື່ອງແບບ, ກາໝາຍ ແລະ ເຄື່ອງໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ທາງລັດຖະການ ໂດຍການກຳນົດ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 92 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 93 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 94 (ປັບປຸງ) ມາດຕະການໂທດເພີ່ມ**

ນອກຈາກໂທດຕົ້ນຕໍທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລ້ວ ຜູ້ກະທຳຜິດຍັງຈະຖືກປະຕິບັດໂທດເພີ່ມ ເປັນຕົ້ນ ຕັດຄະແນນ ຫຼື ຖອນໃບອະນຸຍາດຂັບຂີ່ຍານພາຫະນະ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 95 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 96 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດນັບແຕ່ວັນທີ.......ພາຍຫຼັງ ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນ ຕົ້ນໄປ.

ກົດໝາຍສະບັບນີ້ປ່ຽນແທນກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012.

ປະທານສະພາແຫ່ງຊາດ